**ກະຊວງອຸດສາຫະກຳ ແລະ ການຄ້າ**

# ຄູ່ມື
# ການຈັດຕັ້ງປະຕິບັດມາດຕະການຄຸ້ມຄອງ
# ສຳລັບການນຳເຂົ້າ ສິນຄ້າອຸປະໂພກ-ບໍລິໂພກ

ກຸມພາ 2022

# ບົດນຳ

ເພື່ອຜັນຂະຫຍາຍ ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດ ສົ່ງເສີມການລົງທຶນ ແລະ ການຜະລິດສິນຄ້າ ສະບັບເລກທີ 99/ນຍ, ລົງວັນທີ 20 ຕຸລາ 2020 ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດ ແລະ ຂໍ້ຕົກລົງ ເລກທີ 2026/ກຜທ, ລົງວັນທີ 04 ທັນວາ 2020 ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ຊ່ວຍວຽກຄະນະສະເພາະກິດ ສົ່ງເສີມການລົງທຶນ ແລະ ການຜະລິດສິນຄ້າ ຕາມຂໍ້ຕົກລົງ ເລກທີ 99/ນຍ, ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ສ້າງຄູ່ມືການຈັດຕັ້ງປະຕິບັດມາດຕະການຄຸ້ມຄອງການນຳເຂົ້າສິນຄ້າອຸປະໂພກ-ບໍລິໂພກ ໂດຍອີງໃສ່ບັນດາກົດໝາຍ, ລະບຽບການ ແລະ ພາລະບົດບາດ ຂອງຂະແໜງການກ່ຽວຂ້ອງ. ຈຸດປະສົງ ແມ່ນເພື່ອບັງຄັບໃຊ້ບັນດາກົດໝາຍ ແລະ ລະບຽບການ ທີ່ໄດ້ວາງອອກ ຢ່າງເຂັ້ມງວດ, ເພື່ອເປັນເຄື່ອງມືຄຸ້ມຄອງການນຳເຂົ້າ ແລະ ຊຸກຍູ້ບັນດາຫົວໜ່ວຍທຸລະກິດ ແລະ ກຸ່ມຜູ້ຜະລິດພາຍໃນ ທີ່ດຳເນີນການຜະລິດກະສິກຳເປັນສິນຄ້າທ່າແຮງ ຂອງ ສປປ ລາວ ໃຫ້ສາມາດຕອບສະໜອງຕໍ່ຄວາມຕ້ອງການພາຍໃນ ຢ່າງພຽງພໍ ແລະ ສາມາດແຂ່ງຂັນກັບສິນຄ້ານຳເຂົ້າຈາກຕ່າງປະເທດ ພ້ອມທັງຮັບປະກັນການປົກປ້ອງຊີວິດ ແລະ ສຸຂະພາບຂອງ ຄົນ, ພືດ ແລະ ສັດ ລວມທັງຄວາມປອດໄພຂອງຜູ້ຊົມໃຊ້.

ຄູ່ມືສະບັບນີ້ ໄດ້ສັງລວມເອົາບັນດາມາດຕະການທີ່ຕິດພັນກັບການນຳເຂົ້າສິນຄ້າ ຈາກບັນດາກົດໝາຍ, ດຳລັດ, ຄຳສັ່ງ, ຂໍ້ຕົກລົງ, ຂໍ້ກຳນົດ ແລະ ມາດຕະການຕ່າງໆ ທີ່ບັນດາກະຊວງ ແລະ ກົມກອງກ່ຽວຂ້ອງ ເປັນຜູ້ວາງອອກ ເພື່ອໃຫ້ພາກລັດ ແລະ ທຸລະກິດ ຕະຫຼອດເຖິງບັນດາດ່ານ ສາມາດຈັດຕັ້ງປະຕິບັດໄດ້ຢ່າງເປັນເອກະພາບກັນ. ເຖິງຢ່າງໃດກໍຕາມ, ກໍບໍ່ອາດປາສະຈາກໄດ້ຂໍ້ຜິດພາດ ແລະ ຂໍ້ບົກຜ່ອງ ຊຶ່ງກະຊວງອຸດສາຫະກຳ ແລະ ການຄ້າ ຍິນດີຮັບເອົາຄຳຕຳນິຕິຊົມ ເພື່ອນຳໄປປັບປຸງ ແລະ ພັດທະນາໃຫ້ດີຂຶ້ນ ໃນຄັ້ງຕໍ່ໄປ.

ກະຊວງອຸດສາຫະກຳ ແລະ ການຄ້າ ຂໍສະແດງຄວາມຂອບໃຈເປັນຢ່າງຍິ່ງ ມາຍັງທຸກພາກສ່ວນກ່ຽວຂ້ອງ ທີ່ໄດ້ເອົາໃຈໃສ່ຄົ້ນຄວ້າ, ປະສານສົມທົບເຊິ່ງກັນ ແລະ ກັນ ແລະ ປະກອບຄຳຄິດເຫັນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການນຳເຂົ້າສິນຄ້າ ເປັນຢ່າງດີ. ຫວັງຢ່າງຍິ່ງວ່າ ຄູ່ມືສະບັບນີ້ ຈະເປັນປະໂຫຍດໃຫ້ແກ່ທຸກພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ບໍ່ຫຼາຍກໍໜ້ອຍ.

ລັດຖະມົນຕີ

ກະຊວງອຸດສາຫະກຳ ແລະ ການຄ້າ

ປອ.ຄຳແພງ ໄຊສົມແພງ

# ສາລະບານ

**ໜ້າ**


ບົດນຳ ........................................................................................................ i

ສາລະບານ ..................................................................................................... ii

I. ສະພາບລວມ ................................................................................................ 1

II. ນິຕິກຳຄຸ້ມຄອງການນຳເຂົ້າ ............................................................................ 2

III. ມາດຕະການຄຸ້ມຄອງການນຳເຂົ້າ ..................................................................... 6

3.1 ມາດຕະການທາງພາສີ ກ່ຽວກັບການແຈ້ງພາສີ ແລະ ການກວດປ່ອຍສິນຄ້ານຳເຂົ້າ ...... 6

3.2 ມາດຕະການຄຸ້ມຄອງຕໍ່ກັບການນຳເຂົ້າ ເຂົ້າກິນ ................................................ 7

3.3 ມາດຕະການຄຸ້ມຄອງຕໍ່ກັບການນຳເຂົ້າ ພືດ-ຜັກ ແລະ ໝາກໄມ້ ............................ 7

3.4 ມາດຕະການຄຸ້ມຄອງຕໍ່ກັບການນຳເຂົ້າ ຝຸ່ນ (ປຸ໋ຍ) .............................................. 8

3.5 ມາດຕະການຄຸ້ມຄອງຕໍ່ກັບການນຳເຂົ້າ ຢາປາບສັດຕູພືດ ..................................... 8

3.6 ມາດຕະການຄຸ້ມຄອງຕໍ່ກັບການນຳເຂົ້າ ສັດ ແລະ ຜະລິດຕະພັນສັດ (ໝູ ແລະ ສັດປີກ) . 9

3.7 ມາດຕະການຕໍ່ກັບການນຳເຂົ້າ ປາ, ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ...................... 9

3.8 ມາດຕະການຕໍ່ກັບການນຳເຂົ້າ ອາຫານສັດ ..................................................... 10

3.9 ມາດຕະການຕໍ່ກັບອາຫານ ແລະ ນ້ຳດື່ມ ....................................................... 10

3.10 ມາດຕະການລວມຕໍ່ກັບການນຳເຂົ້າ ແລະ ຈຳໜ່າຍ ສິນຄ້າ .............................. 11

IV. ສະຫຼຸບຕີລາຄາ .......................................................................................... 11

ເອກະສານຊ້ອນທ້າຍ 01: ລາຍລະອຽດຂອງມາດຕະການຄຸ້ມຄອງການນຳເຂົ້າ ................ 12

1. ມາດຕະການຄຸ້ມຄອງການນຳເຂົ້າ ເຂົ້າກິນ ..................................................... 12

2. ມາດຕະການຄຸ້ມຄອງການນຳເຂົ້າ ພືດ-ຜັກ ແລະ ໝາກໄມ້ .................................. 14

3. ມາດຕະການຄຸ້ມຄອງການນຳເຂົ້າ ຝຸ່ນ ........................................................... 17

4. ມາດຕະການຄຸ້ມຄອງການນຳເຂົ້າ ຢາປາບສັດຕູພືດ ........................................... 19

5. ມາດຕະການຄຸ້ມຄອງການນຳເຂົ້າ ສັດ ແລະ ຜະລິດຕະພັນສັດ (ໝູ ແລະ ສັດປີກ) ...... 25

6. ມາດຕະການຄຸ້ມຄອງການນຳເຂົ້າ ປາ, ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ................ 27

7. ມາດຕະການຄຸ້ມຄອງການນຳເຂົ້າ ອາຫານສັດ ..............................................29
8. ມາດຕະການຄຸ້ມຄອງການນຳເຂົ້າ ອາຫານ ແລະ ນ້ຳດື່ມ....................................31
9. ມາດຕະການຄຸ້ມຄອງການນຳເຂົ້າລວມ ......................................................33
10. ລະບຽບການທາງພາສີ ກ່ຽວກັບມູນຄ່າແຈ້ງພາສີ ແລະ ການກວດປ່ອຍສິນຄ້ານຳເຂົ້າ ຢູ່ດ່ານ.................................................................................................35

ເອກະສານຊ້ອນທ້າຍ 02: ຂັ້ນຕອນ ແລະ ເອກະສານປະກອບສຳລັບການອອກອະນຸຍາດ, ຢັ້ງຢືນ ນຳເຂົ້າສິນຄ້າ ......................................................................................38
1. ຂັ້ນຕອນການອອກໃບອະນຸຍາດນຳເຂົ້າ ເຂົ້າກິນ ............................................38
2. ຂັ້ນຕອນການອອກໃບອະນຸຍາດນຳເຂົ້າ ພືດ-ຜັກ ແລະ ໝາກໄມ້ .........................43
3. ຂັ້ນຕອນການອອກໃບອະນຸຍາດນຳເຂົ້າ ຝຸ່ນ.................................................46
4. ຂັ້ນຕອນການຈົດທະບຽນ ຢາປາບສັດຕູພືດນຳເຂົ້າ..........................................48
5. ຂັ້ນຕອນການອອກໃບອະນຸຍາດນຳເຂົ້າ ສັດ ແລະ ຜະລິດຕະພັນສັດ (ໝູ ແລະ ສັດປີກ) .50
6. ຂັ້ນຕອນການອອກໃບອະນຸຍາດນຳເຂົ້າ ປາ, ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ .........52
7. ຂັ້ນຕອນການຂຶ້ນທະບຽນ ອາຫານສັດນຳເຂົ້າ................................................54
8. ຂັ້ນຕອນການອອກໃບອະນຸຍາດນຳເຂົ້າ ອາຫານ ແລະ ເຄື່ອງດື່ມ..........................56
9. ຂັ້ນຕອນການອອກໜັງສືຢັ້ງຢືນສິດທິພິເສດດ້ານອັດຕາພາສີນຳເຂົ້າ ......................59
10. ຂັ້ນຕອນການກວດປ່ອຍສິນຄ້ານຳເຂົ້າ ຢູ່ດ່ານພາສີສາກົນ..................................61

## I. ສະພາບລວມ

ນັບແຕ່ການເປີດເສລີທາງດ້ານການຄ້າຂອງ ສປປ ລາວ ໃນຂອບສັນຍາການຄ້າພາກພື້ນ ແລະ ສາກົນ ໂດຍສະເພາະອາຊຽນ ແລະ ອົງການການຄ້າໂລກ ເຮັດໃຫ້ການນຳເຂົ້າ-ສົ່ງອອກ ມີການຂະຫຍາຍຕົວ ຢ່າງຕໍ່ເນື່ອງ. ສິນຄ້າສົ່ງອອກໄປຕ່າງປະເທດ ສ່ວນໃຫຍ່ເປັນສິນຄ້າກະສິກຳທີ່ເປັນວັດຖຸດິບ ແລະ ບໍ່ທັນໄດ້ປຸງແຕ່ງເປັນສຳເລັດຮູບ ເຮັດໃຫ້ມູນຄ່າເພີ່ມຂອງສິນຄ້າບໍ່ສູງ. ໃນທາງກົງກັນຂ້າມ, ສິນຄ້າທີ່ນຳເຂົ້າສ່ວນໃຫຍ່ ແມ່ນສິນຄ້າສຳເລັດຮູບ ທີ່ສາມາດຊົມໃຊ້ ຫຼື ບໍລິໂພກ ໄດ້ເລີຍ ເຊິ່ງບໍ່ໄດ້ຜ່ານຂະບວນການປຸງແຕ່ງ, ປະກອບ ຫຼື ຜະລິດ ຢູ່ພາຍໃນ. ພ້ອມດຽວກັນ, ສິນຄ້າທີ່ນຳເຂົ້າມາ ສປປ ລາວ ສ່ວນໃຫຍ່ ເປັນສິນຄ້າທີ່ບໍ່ສາມາດຜະລິດໄດ້ຢູ່ພາຍໃນ ແລະ ເຖິງວ່າມີສິນຄ້າຈຳນວນໜຶ່ງທີ່ສາມາດຜະລິດຢູ່ພາຍໃນໄດ້ ແຕ່ກໍ່ຍັງບໍ່ສາມາດຕອບສະໜອງທາງດ້ານລາຄາ, ປະລິມານ ແລະ ຄຸນນະພາບທີ່ດີກວ່າ ຈຶ່ງເຮັດໃຫ້ຍັງມີຄວາມຈຳເປັນນຳເຂົ້າຢູ່ ເຊິ່ງສົ່ງຜົນກະທົບຕໍ່ຄວາມອາດສາມາດໃນການແຂ່ງຂັນຂອງຜູ້ຜະລິດພາຍໃນ. ສິນຄ້າພາຍໃນທີ່ໄດ້ຮັບຜົນກະທົບສ່ວນໃຫຍ່ແມ່ນ ປະເພດພືດ-ຜັກ, ໝາກໄມ້, ຝຸ່ນ, ສັດ ແລະ ຜະລິດຕະພັນສັດ (ງົວ, ໝູ, ໄກ່, ປາ), ອາຫານ, ກາເຟ, ນ້ຳດື່ມ, ເບຍ, ສິນຄ້າອຸດສາຫະກຳ (ເຫຼັກ, ຊີມັງ, ຢາສູບ) ແລະ ອື່ນໆ.

ຜ່ານມາບັນດາຂະແໜງການທີ່ກ່ຽວຂ້ອງ ຄື: ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງສາທາລະນະສຸກ ແລະ ກະຊວງອື່ນທີ່ກ່ຽວຂ້ອງ ໄດ້ອອກບັນດາກົດໝາຍ, ລະບຽບການ ແລະ ມາດຕະການທີ່ຕິດພັນກັບການນຳເຂົ້າ ຢ່າງຊັດເຈນ ແນໃສ່ປົກປ້ອງຊີວິດ, ສຸຂະພາບ ແລະ ຄວາມປອດໄພຂອງຄົນ ແລະ ປົກປັກຮັກສາສິ່ງແວດລ້ອມ ເຊັ່ນ: ມາດຕະການສຸຂານາໄມ ແລະ ສຸຂານາໄມພືດ (SPS), ມາດຕະການເຕັກນິກຕໍ່ການຄ້າ (TBT), ມາດຕະການອອກໃບອະນຸຍາດ ແລະ ໃບຢັ້ງຢືນ ການນຳເຂົ້າ, ການຕິດສະຫຼາກສິນຄ້າ, ການກວດກາ, ການກຳນົດດ່ານຊາຍແດນ ແລະ ອື່ນໆ. ບັນດາເງື່ອນໄຂ ຫຼື ມາດຕະການເຫຼົ່ານີ້ ບໍ່ໄດ້ຮັບການຈັດຕັ້ງປະຕິບັດທັງໝົດ ຍ້ອນການເຜີຍແຜ່ມາດຕະການໃຫ້ມີຄວາມໂປ່ງໃສ ຍັງບໍ່ທັນທົ່ວເຖິງ ແລະ ການບັງຄັບໃຊ້ມາດຕະການຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຍັງບໍ່ທັນເຂັ້ມງວດ ແລະ ສາເຫດອື່ນໆ ຈຶ່ງເຮັດໃຫ້ມີຜູ້ຄ້າຈຳນວນໜຶ່ງ ສວຍໂອກາດລັກລອບນຳເຂົ້າຜ່ານດ່ານສາກົນ, ທ້ອງຖິ່ນ ແລະ ປະເພນີຕ່າງໆ ເຊິ່ງສົ່ງຜົນກະທົບດ້ານລົບຕໍ່ຜູ້ຜະລິດ ແລະ ຜູ້ບໍລິໂພກ ພາຍໃນ.

ເມື່ອເຫັນໄດ້ບັນຫາດັ່ງກ່າວ, ລັດຖະບານ ຈຶ່ງໄດ້ແຕ່ງຕັ້ງຄະນະສະເພາະກິດສົ່ງເສີມການລົງທຶນ ແລະ ການຜະລິດສິນຄ້າ ຕາມຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ເລກທີ 99/ນຍ, ລົງວັນທີ 20 ຕຸລາ 2020 ໂດຍແມ່ນທ່ານ ປອ ສອນໄຊ ສີພັນດອນ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນຫົວໜ້າຄະນະ. ນອກຈາກນີ້, ຍັງໄດ້ມີການແຕ່ງຕັ້ງຄະນະຮັບຜິດຊອບຊ່ວຍວຽກຄະນະສະເພາະກິດ 99/ນຍ ຕາມຂໍ້ຕົກລົງຂອງກະຊວງແຜນການ ແລະ ການລົງທຶນ ເລກທີ 2026/ກຜທ, ລົງວັນທີ 04 ທັນວາ 2020 ເຊິ່ງປະກອບມີ 03 ໜ່ວຍງານ ຄື:

**<u>ໜ່ວຍງານທີ 01</u>:** ສົ່ງເສີມການລົງທຶນ ແລະ ປັບປຸງສະພາບແວດລ້ອມການລົງທຶນ ໂດຍແມ່ນທ່ານ ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນຫົວໜ້າໜ່ວຍງານ.

**<u>ໜ່ວຍງານທີ 02</u>:** ສົ່ງເສີມການຜະລິດ ແລະ ຊົມໃຊ້ຜະລິດຕະພັນ ທີ່ຜະລິດຢູ່ພາຍໃນ ແລະ ການຄຸ້ມຄອງການນຳເຂົ້າສິນຄ້າອຸປະໂພກ-ບໍລິໂພກ ໂດຍແມ່ນທ່ານຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເປັນຫົວໜ້າໜ່ວຍງານ. ໜ່ວຍງານດັ່ງກ່າວ ໄດ້ແບ່ງອອກເປັນ 02 ຈຸງານ ຄື:

- <u>ຈຸງານທີ 01</u>: ສົ່ງເສີມການຜະລິດ, ຈຳໜ່າຍ, ຄຸ້ມຄອງຕະຫຼາດ ແລະ ສົ່ງເສີມການຊົມໃຊ້ສິນຄ້າທີ່ຜະລິດໄດ້ຢູ່ພາຍໃນ ແບບເປັນລະບົບຕ່ອງໂສ້ຄົບຊຸດ.
- <u>ຈຸງານທີ 02</u>: ຄຸ້ມຄອງການນຳເຂົ້າສິນຄ້າອຸປະໂພກ-ບໍລິໂພກ.
  - <u>ຈຸງານຍ່ອຍ 1</u>: ລົງສຸ່ມກວດ, ຕິດຕາມ ແລະ ເກັບກຳລະອຽດສະຖິຕິການນຳເຂົ້າສິນຄ້າອຸປະໂພກ-ບໍລິໂພກ ທີ່ນຳເຂົ້າຜ່ານດ່ານປະເພນີ ແລະ ດ່ານສາກົນ, ຕະຫຼາດຈຳໜ່າຍຂະໜາດໃຫຍ່ ແລະ ກາງ ພາຍໃນນະຄອນຫຼວງວຽງຈັນ.
  - <u>ຈຸງານຍ່ອຍ 2</u>: ຄົ້ນຄວ້າມາດຕະການຄຸ້ມຄອງການນຳເຂົ້າ.

**<u>ໜ່ວຍງານທີ 03</u>:** ໜ່ວຍງານຄົ້ນຄວ້ານະໂຍບາຍ ໂດຍແມ່ນຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນຫົວໜ້າໜ່ວຍງານ.

ສຳລັບຄູ່ມືສະບັບນີ້ ແມ່ນຖືກສ້າງຂຶ້ນໂດຍຈຸງານຍ່ອຍ 2, ຈຸງານທີ 02, ໜ່ວຍງານທີ 02 ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດມາດຕະການຄຸ້ມຄອງການນຳເຂົ້າສິນຄ້າອຸປະໂພກ-ບໍລິໂພກ ບົນພື້ນຖານຄວາມສອດຄ່ອງກັບນິຕິກຳ ແລະ ມາດຕະການຕ່າງໆ ທີ່ຂະແໜງການລັດທີ່ກ່ຽວຂ້ອງ ເປັນຜູ້ວາງອອກ.

## II. <u>ນິຕິກຳຄຸ້ມຄອງການນຳເຂົ້າ</u>

ຜ່ານການຄົ້ນຄວ້າ ແລະ ທົບທວນຄືນບັນດານິຕິກຳທີ່ກ່ຽວຂ້ອງກັບການນຳເຂົ້າ ແລະ ສົ່ງອອກສິນຄ້າ ຂອງຂະແໜງການລັດທີ່ກ່ຽວຂ້ອງ ເປັນຜູ້ວາງອອກ ສາມາດສັງລວມໄດ້ດັ່ງນີ້:

**2.1 <u>ຂະແໜງການອຸດສາຫະກຳ ແລະ ການຄ້າ</u>:** ມີ 03 ວຽກງານໃຫຍ່ ຄື:

### 1) <u>ວຽກງານການນຳເຂົ້າ-ສົ່ງອອກ</u>

- ດຳລັດ ວ່າດ້ວຍການນຳເຂົ້າ ແລະ ສົ່ງອອກສິນຄ້າ ເລກທີ 114/ລບ, ລົງວັນທີ 06 ເມສາ 2011 ເຊິ່ງກຳນົດເງື່ອນໄຂ, ຫຼັກການ, ລະບຽບການລວມຂອງການນຳເຂົ້າ, ສົ່ງອອກ, ຜ່ານແດນ, ນຳເຂົ້າຊົ່ວຄາວ ແລະ ການຈຳໜ່າຍ ບົນພື້ນຖານຄວາມສອດຄ່ອງ ກັບ ພັນທະສັນຍາຕ່າງໆ ທີ່ ສປປ ລາວ ມີຕໍ່ອົງການການຄ້າໂລກ. ຖືໄດ້ວ່າເປັນນິຕິກຳຫຼັກ ໃຫ້ແກ່ການຈັດຕັ້ງປະຕິບັດວຽກງານການນຳເຂົ້າ ແລະ ສົ່ງອອກ.
- ດຳລັດ ວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ ເລກທີ 180/ນຍ, ລົງວັນທີ 07 ກໍລະກົດ 2009 ເຊິ່ງກຳນົດບັນດາເງື່ອນໄຂ, ຂັ້ນຕອນ ແລະ

ເອກະສານປະກອບ ສຳລັບການອອກໃບອະນຸຍາດນຳເຂົ້າສິນຄ້າແບບອັດຕະໂນມັດ ແລະ ບໍ່ອັດຕະໂນມັດ ຂອງຂະແໜງການຄຸ້ມຄອງທີ່ກ່ຽວຂ້ອງ ໃຫ້ມີຄວາມເປັນເອກະພາບກັນທົ່ວປະເທດ.

- ແຈ້ງການ ວ່າດ້ວຍລາຍການສິນຄ້າທີ່ຕ້ອງຂໍອະນຸຍາດນຳເຂົ້າ ຫຼື ສົ່ງອອກ ແບບອັດຕະໂນມັດ ແລະ ແບບບໍ່ອັດຕະໂນມັດ ເລກທີ 0076/ອຄ.ກຂອ, ລົງວັນທີ 13 ມັງກອນ 2012 (ປະຈຸບັນ, ກະຊວງອຸດສາຫະກຳ ແລະ ການຄ້າ ກຳລັງຄົ້ນຄວ້າປັບປຸງແຈ້ງການ ດັ່ງກ່າວຢູ່). ບັນຊີດັ່ງກ່າວ ກຳນົດລາຍການສິນຄ້າທີ່ຂະແໜງການລັດທີ່ກ່ຽວຂ້ອງ ເປັນຜູ້ຄຸ້ມຄອງອອກອະນຸຍາດນຳເຂົ້າ ແລະ ສົ່ງອອກ. ສຳລັບສິນຄ້າທີ່ບໍ່ໄດ້ລະບຸໄວ້ໃນແຈ້ງການດັ່ງກ່າວ ແມ່ນໃຫ້ດຳເນີນຕາມຂັ້ນຕອນການແຈ້ງພາສີໄດ້ເລີຍ ຍົກເວັ້ນສິນຄ້າທີ່ຖືກຄຸ້ມຄອງໂດຍກົງພາຍໃຕ້ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ, ສິນຄ້າທີ່ຖືກຄຸ້ມຄອງໂດຍມາດຕະການ SPS ແລະ TBT ເຊິ່ງຕ້ອງປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ ກ່ອນການແຈ້ງພາສີນຳເຂົ້າ ຫຼື ສົ່ງອອກ.

2) <u>ວຽກງານການຄ້າພາຍໃນ</u>

- ກົດໝາຍ ວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2021 ເຊິ່ງກຳນົດໃຫ້ການນຳເຂົ້າ, ການຂາຍ, ການຈຳໜ່າຍສິນຄ້າ ແລະ ການບໍລິການ ຕ້ອງປະຕິບັດຕາມເງື່ອນໄຂ, ມາດຕະຖານ ແລະ ຜ່ານການກວດກາຂອງຂະແໜງການທີ່ກ່ຽວຂ້ອງ ກຳນົດໄວ້ຢ່າງເຂັ້ມງວດ ເພື່ອຮັບປະກັນຄຸນນະພາບ, ຄວາມປອດໄພ, ຄວາມສະດວກວ່ອງໄວ, ລາຄາສົມເຫດສົມຜົນ ແລະ ບໍ່ເອົາລັດເອົາປຽບຜູ້ຊົມໃຊ້.
- ດຳລັດ ວ່າດ້ວຍການກວດກາການຄ້າ ເລກທີ 580/ລບ, ລົງວັນທີ 04 ທັນວາ 2012 ເຊິ່ງກຳນົດຂອບເຂດສິດໃນການກວດກາສິນຄ້າ ແລະ ທຸລະກິດທີ່ເຄື່ອນໄຫວບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.
- ດຳລັດ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010 ທີ່ກຳນົດມາດຕະການຄວບຄຸມລາຄາສິນຄ້າຄຸ້ມຄອງຕາມບັນຊີທີ່ກະຊວງອຸດສາຫະກຳ ແລະ ການຄ້າ ກຳນົດໄວ້;
- ຄຳສັ່ງ ກ່ຽວກັບການຕິດສະຫຼາກສິນຄ້າເປັນພາສາລາວ ເລກທີ 2501/ອຄ.ຄພນ, ລົງວັນທີ 16 ທັນວາ 2015 ທີ່ກຳນົດໃຫ້ມີການຕິດສະຫຼາກສິນຄ້າເປັນພາສາລາວກ່ອນ ຈຶ່ງຈຳໜ່າຍໃຫ້ຜູ້ຊົມໃຊ້ ຫຼື ສະໜອງໃຫ້ຜູ້ຂາຍຍ່ອຍ.

3) <u>ວຽກງານມາດຕະຖານ ແລະ ວັດແທກ:</u>

- ກົດໝາຍວ່າດ້ວຍ ມາດຕະຖານ ເລກທີ 49/ສພຊ, ລົງວັນທີ 18 ກໍລະກົດ 2014;
- ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງສິນຄ້າຫຸ້ມຫໍ່, ເລກທີ 1572/ກອຕ, ລົງວັນທີ 27 ພະຈິກ 2020.

## 2.2 ຂະແໜງການກະສິກຳ ແລະ ປ່າໄມ້

- ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ກົດໝາຍ ວ່າດ້ວຍການປະມົງ ເລກທີ 03/ສພຊ, ລົງວັນທີ 09 ກໍລະກົດ 2009;
- ກົດໝາຍ ວ່າດ້ວຍສັດນ້ຳ ແລະ ສັດປ່າ ເລກທີ 07/ສພຊ, ລົງວັນທີ 24 ທັນວາ 2008;
- ດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ເລກທີ 258/ລບ, ລົງວັນທີ 24 ສິງຫາ 2017;
- ດຳລັດ ວ່າດ້ວຍອາຫານສັດ, ເລກທີ 02/ລບ, ລົງວັນທີ 02 ມັງກອນ 2020;
- ດຳລັດ ວ່າດ້ວຍການຄຸ້ມຄອງການເຄື່ອນຍ້າຍ ສັດ ແລະ ຜະລິດຕະພັນສິນຄ້າ ກ່ຽວກັບ ສັດ ເລກທີ 230/ລບ, ລົງວັນທີ 04 ມິຖຸນາ 2012;
- ຂໍ້ຕົກລົງ ວ່າດ້ວຍມາດຕະການສຸຂານາໄມພືດ ສໍາລັບການນໍາເຂົ້າ ແລະ ສົ່ງຜ່ານພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ເລກທີ 2985/ກປ, ລົງວັນທີ 28 ມິຖຸນາ 2019;
- ຂໍ້ຕົກລົງ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ບັນຊີພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ຕ້ອງຂໍອະນຸຍາດກ່ອນການນໍາເຂົ້າ ສປປ ລາວ ໂດຍຜ່ານການ ວິໄຈຄວາມສ່ຽງສັດຕູພືດ ເລກທີ 2987/ກປ, ລົງວັນທີ 28 ມິຖຸນາ 2019;
- ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຝຸ່ນໃນ ສປປ ລາວ ເລກທີ 2169/ກປ, ລົງວັນທີ 24 ຕຸລາ 2013.
- ຂໍ້ຕົກລົງ ວ່າດ້ວຍການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ເລກທີ 0795/ກປ, ລົງວັນທີ 18 ເມສາ 2019;
- ຂໍ້ຕົກລົງ ວ່າດ້ວຍການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນ ສັດນ້ຳ ເລກທີ 4211/ກປ, ລົງວັນທີ 29 ພະຈິກ 2019.

## 2.3 ຂະແໜງການສາທາລະນະສຸກ

- ກົດໝາຍ ວ່າດ້ວຍອາຫານ (ສະບັບປັບປຸງ) ເລກທີ 33/ສພຊ, ລົງວັນທີ 24 ກໍລະກົດ 2013;

- ຂໍ້ຕົກລົງ ວ່າດ້ວຍການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານ ເລກທີ 1166/ສທ, ລົງວັນທີ 21 ມິຖຸນາ 2018;
- ຂໍ້ຕົກລົງ ວ່າດ້ວຍການກວດກາອາຫານ ເລກທີ 297/ກຊສ, ລົງວັນທີ 24 ກຸມພາ 2012.

## 2.4 ຂະແໜງການການເງິນ

- ກົດໝາຍ ວ່າດ້ວຍພາສີ (ສະບັບປັບປຸງ) ເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ບົດແນະນຳ ວ່າດ້ວຍການກຳນົດມູນຄ່າແຈ້ງພາສີ ສຳລັບສິນຄ້ານຳເຂົ້າ ເລກທີ 1537/ກງ, ລົງວັນທີ 04 ມິຖຸນາ 2012;
- ແຈ້ງການ ກ່ຽວກັບຢຸດຕິການນຳໃຊ້ລະບອບການນຳເຂົ້າຍ່ອຍ SD4, ລະຫັດເຄົ້າ 2 ຕົວເລກ ຢູ່ດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ ເລກທີ 4572/ກງ, ລົງວັນທີ 17 ກັນຍາ 2021;
- ບົດແນະນຳ ວ່າດ້ວຍການອະທິບາຍເພີ່ມເຕີມ ກ່ຽວກັບການກຳນົດມູນຄ່າແຈ້ງພາສີ ສຳລັບສິນຄ້ານຳເຂົ້າ ເລກທີ 11589/ກພສ, ລົງວັນທີ 24 ກໍລະກົດ 2012.
- ບົດແນະນຳ ກ່ຽວກັບການແຈ້ງພາສີເປັນລາຍລະອຽດດ້ວຍລະບົບເອເລັກໂຕຣນິກ ເລກທີ 00097/ກພສ, ລົງວັນທີ 06 ມັງກອນ 2017;
- ຄຳແນະນຳ ວ່າດ້ວຍການຄຸ້ມຄອງການສົ່ງອອກ-ນຳເຂົ້າ ສິນຄ້າ, ເຄື່ອງຂອງ ຜ່ານດ່ານຊາຍແດນທ້ອງຖິ່ນ ແລະ ດ່ານຊາຍແດນປະເພນີ ເລກທີ 3708/ກງ, ລົງວັນທີ 16 ກັນຍາ 2019;
- ຄຳແນະນຳ ກ່ຽວກັບແຫຼ່ງກຳເນີດສິນຄ້າ ແລະ ການໃຫ້ສິດທິພິເສດດ້ານອັດຕາພາສີ ຕາມເງື່ອນໄຂຂອງບັນດາສັນຍາການຄ້າເສລີຕ່າງໆ ທີ່ ສປປ ລາວ ເຂົ້າເປັນພາຄີ ເລກທີ 3782/ກພສ, ລົງວັນທີ 16 ກຸມພາ 2016.

## III. ມາດຕະການຄຸ້ມຄອງການນຳເຂົ້າ

ໂດຍລວມແລ້ວ, ການບັງຄັບໃຊ້ບັນດານິຕິກຳ ແລະ ມາດຕະການທີ່ຂະແໜງການລັດທີ່ກ່ຽວຂ້ອງ ເປັນຜູ້ວາງອອກ ຕໍ່ກັບສິນຄ້ານຳເຂົ້າຈາກຕ່າງປະເທດ ຍັງບໍ່ສາມາດປະຕິບັດໄດ້ທັງໝົດ ເຊັ່ນ: ມີການນຳສິນຄ້າເຂົ້າ ໂດຍແຈ້ງເສຍພາສີເປັນເຄື່ອງຂອງຕິດຕົວຜູ້ໂດຍສານ; ຈຳນວນສິນຄ້າຕົວຈິງ ເກີນທີ່ໄດ້ກຳນົດໄວ້ໃນໃບແຈ້ງພາສີ ຫຼື ມູນຄ່າແຈ້ງພາສີຕໍ່າກວ່າຄວາມເປັນຈິງ; ເສຍພາສີ-ອາກອນ ບໍ່ຖືກຕ້ອງ (ລັກສະນະມອບເໝົາ); ການກວດກາຈຳນວນ, ເອກະສານ ແລະ ມາດຕະຖານ ຫຼື ຄຸນນະພາບຂອງສິນຄ້າ ບໍ່ເປັນໄປຕາມຫຼັກການບໍລິຫານຄວາມສ່ຽງ, ການນຳເຂົ້າຜ່ານດ່ານທີ່ບໍ່ໄດ້ກຳນົດໄວ້ ແລະ ອື່ນໆ. ສະນັ້ນ, ທຸກພາກສ່ວນທີ່ກ່ຽວຂ້ອງ ຄວນບັງຄັບໃຊ້ບັນດາລະບຽບການ ແລະ ມາດຕະການ ເພື່ອຄຸ້ມຄອງສິນຄ້ານຳເຂົ້າອຸປະໂພກ-ບໍລິໂພກ ໂດຍສະເພາະສິນຄ້າທີ່ສາມາດຜະລິດ ແລະ ສະໜອງໄດ້ຢູ່ໃນພາຍໃນ ເປັນຕົ້ນ ເຂົ້າ, ພືດຜັກ, ຝຸ່ນ, ໝາກໄມ້, ສັດ ແລະ ຜະລິດຕະພັນສັດ, ອາຫານສັດ, ປາ ແລະ ອາຫານ ຊຶ່ງເປັນລາຍການສິນຄ້າບູລິມະສິດຂອງຄະນະພວກເຮົາ. ບັນດາມາດຕະການຄຸ້ມຄອງການນຳເຂົ້າ ທີ່ຕິດພັນກັບສິນຄ້າເຫຼົ່ານີ້ ສາມາດສັງລວມໄດ້ດັ່ງລຸ່ມນີ້:

### 3.1 ມາດຕະການທາງພາສີ ກ່ຽວກັບການແຈ້ງພາສີ ແລະ ການກວດປ່ອຍສິນຄ້ານຳເຂົ້າ

ຜ່ານການຄົ້ນຄວ້າລະບຽບການທາງພາສີ ສາມາດໄຈ້ແຍກລະອຽດ ກ່ຽວກັບມາດຕະການແຈ້ງພາສີ ແລະ ການກວດປ່ອຍສິນຄ້າ ຢູ່ດ່ານ ຄືດັ່ງນີ້:

**ຂະແໜງການພາສີ:**

1. ມູນຄ່າແຈ້ງພາສີ ສົ່ງອອກ-ນຳເຂົ້າ ຕ້ອງແມ່ນມູນຄ່າສິນຄ້າ, ເຄື່ອງຂອງ ລວມທັງຄ່າຂົນສົ່ງ ແລະ/ຫຼື ຄ່າປະກັນໄພ ທີ່ນຳສົ່ງຮອດດ່ານພາສີຊາຍແດນບ່ອນສົ່ງອອກ ຫຼື ນຳເຂົ້າ.
2. ການກວດປ່ອຍສິນຄ້າ ຕ້ອງດຳເນີນຕາມຂັ້ນຕອນການຄວບຄຸມພາສີ. ໃນກໍລະນີເປັນສິນຄ້າຄວບຄຸມ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ ເສຍກ່ອນ.
3. ການຢຸດຕິການນຳໃຊ້ລະບອບການນຳເຂົ້າ ຍ່ອຍ SD4, ລະຫັດເຄົ້າ 2 ຕົວເລກ 44 ຢູ່ດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ.
4. ການອອກໜັງສືຢັ້ງຢືນສິດພິເສດດ້ານອັດຕາພາສີ ສຳລັບການນຳເຂົ້າສິນຄ້າທຸກປະເພດທີ່ຕ້ອງການສິດທິພິເສດທາງດ້ານອັດຕາພາສີນຳເຂົ້າ.

### 3.2 <u>ມາດຕະການຄຸ້ມຄອງຕໍ່ກັບການນຳເຂົ້າ ເຂົ້າກິນ</u>

ຜ່ານການຄົ້ນຄວ້າລະບຽບການ ແລະ ມາດຕະການຄຸ້ມຄອງການນຳເຂົ້າ ເຂົ້າກິນ ສາມາດສະຫຼຸບໄດ້ດັ່ງນີ້:

**<u>ມີຈຳນວນທັງໝົດ 05 ມາດຕະການ</u>:**

**<u>ຂະແໜງການກະສິກຳ ແລະ ປ່າໄມ້ (ປູກຝັງ)</u>: 04 ມາດຕະການ**

1. ການອອກໃບອະນຸຍາດນຳເຂົ້າພືດ, ຜະລິດຕະພັນພືດ, ວັດຖຸຕ້ອງຄວບຄຸມ ທີ່ຕ້ອງຂໍອະນຸຍາດນຳເຂົ້າ ໂດຍຜ່ານການວິໄຈຄວາມສ່ຽງສັດຕູພືດ.
2. ກຳນົດໃຫ້ມີໃບຢັ້ງຢືນສຸຂານາໄມພືດຈາກປະເທດຕົ້ນທາງ ສຳລັບການນຳເຂົ້າ ເຂົ້າກິນ.
3. ການກວດກາພືດ ແລະ ຜະລິດຕະພັນພືດ ນຳເຂົ້າ.
4. ການກັກກັນພືດນຳເຂົ້າທີ່ມີຄວາມສ່ຽງ.

**<u>ຂະແໜງການອຸດສາຫະກຳ ແລະ ການຄ້າ (ຂະແໜງນຳເຂົ້າ-ສົ່ງອອກ)</u>: 01 ມາດຕະການ**

1. ການອອກໃບອະນຸຍາດນຳເຂົ້າ ເຂົ້າກິນ.

### 3.3 <u>ມາດຕະການຄຸ້ມຄອງຕໍ່ກັບການນຳເຂົ້າ ພືດ-ຜັກ ແລະ ໝາກໄມ້</u>

ຜ່ານການຄົ້ນຄວ້າລະບຽບການ ແລະ ມາດຕະການຄຸ້ມຄອງການນຳເຂົ້າ ພືດ-ຜັກ ແລະ ໝາກໄມ້ ສາມາດສະຫຼຸບໄດ້ດັ່ງນີ້:

**<u>ຂະແໜງການກະສິກຳ ແລະ ປ່າໄມ້ (ປູກຝັງ)</u>: 08 ມາດຕະການ ຕໍ່ກັບ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ຈຳນວນ 136 ລາຍການ ຕາມຂໍ້ຕົກລົງ ເລກທີ 2987/ກປ, ລົງວັນທີ 28 ມິຖຸນາ 2019:**

1. ການອອກໃບອະນຸຍາດນຳເຂົ້າພືດ, ຜະລິດຕະພັນພືດ, ວັດຖຸຕ້ອງຄວບຄຸມ ທີ່ຕ້ອງຂໍອະນຸຍາດນຳເຂົ້າ ໂດຍຜ່ານການວິໄຈຄວາມສ່ຽງສັດຕູພືດ.
2. ກຳນົດໃຫ້ມີໃບຢັ້ງຢືນສຸຂານາໄມພືດຈາກປະເທດຕົ້ນທາງ ສຳລັບການນຳເຂົ້າພືດ, ຜະລິດຕະພັນພືດ, ແລະ ວັດຖຸຕ້ອງຄວບຄຸມ.
3. ການກວດກາພືດ ແລະ ຜະລິດຕະພັນພືດ ນຳເຂົ້າ.
4. ການກັກກັນພືດນຳເຂົ້າທີ່ມີຄວາມສ່ຽງ.
5. ການຕິດສະຫຼາກ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ນຳເຂົ້າ.
6. ການນຳເຂົ້າພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ຕ້ອງຜ່ານດ່ານທີ່ກຳນົດໄວ້.
7. ການກວດກາ ຜັກນຳເຂົ້າ.
8. ການກວດກາ ໝາກໄມ້ນຳເຂົ້າ.

### 3.4 <u>ມາດຕະການຄຸ້ມຄອງຕໍ່ກັບການນຳເຂົ້າ ຝຸ່ນ (ປຸ໋ຍ)</u>

ຜ່ານການຄົ້ນຄວ້າລະບຽບການ ແລະ ມາດຕະການຄຸ້ມຄອງການນຳເຂົ້າ ຝຸ່ນ (ປຸ໋ຍ) ສາມາດສະຫຼຸບໄດ້ດັ່ງນີ້:

**<u>ຂະແໜງການກະສິກຳ ແລະ ປ່າໄມ້ (ປູກຝັງ)</u>: 06 ມາດຕະການ**

1. ການອອກໃບອະນຸຍາດນຳເຂົ້າຝຸ່ນ.
2. ການຕິດສະຫຼາກຝຸ່ນນຳເຂົ້າ.
3. ການຫຸ້ມຫໍ່ຝຸ່ນນຳເຂົ້າ.
4. ການຈົດທະບຽນຝຸ່ນນຳເຂົ້າ.
5. ມາດຕະຖານຝຸ່ນນຳເຂົ້າ.
6. ການກວດກາຝຸ່ນນຳເຂົ້າ.

### 3.5 <u>ມາດຕະການຄຸ້ມຄອງຕໍ່ກັບການນຳເຂົ້າ ຢາປາບສັດຕູພືດ</u>

ຜ່ານການຄົ້ນຄວ້າລະບຽບການ ແລະ ມາດຕະການຄຸ້ມຄອງການນຳເຂົ້າ ຢາປາບສັດຕູພືດ ສາມາດສະຫຼຸບໄດ້ດັ່ງນີ້:

**<u>ຂະແໜງການກະສິກຳ ແລະ ປ່າໄມ້ (ປູກຝັງ)</u>: 08 ມາດຕະການ**

1. ການຂົນສົ່ງ ແລະ ການເກັບຮັກສາ ຢາປາບສັດຕູພືດນຳເຂົ້າ.
2. ການຕິດສະຫຼາກ ຢາປາບສັດຕູພືດນຳເຂົ້າ.
3. ການຫຸ້ມຫໍ່ ຢາປາບສັດຕູພືດນຳເຂົ້າ.
4. ຢາປາບສັດຕູພືດ ຕ້ອງໄດ້ນຳເຂົ້າຜ່ານດ່ານທີ່ກຳນົດໄວ້.
5. ການກວດກາ ຢາປາບສັດຕູພືດນຳເຂົ້າ.
6. ກຳນົດໃຫ້ຜູ້ນຳເຂົ້າຕ້ອງຂຶ້ນທະບຽນຜູ້ນຳເຂົ້າ ຢາປາບສັດຕູພືດ.
7. ຢາປາບສັດຕູພືດນຳເຂົ້າ ທີ່ເປັນອັນຕະລາຍປານກາງ, ໜ້ອຍ ແລະ ບໍ່ເປັນພິດກະທັນຫັນ ຕ້ອງໄດ້ຮັບການຈົດທະບຽນ.
8. ຢາປາບສັດຕູພືດ ທີ່ເປັນອັນຕະລາຍປານກາງ, ໜ້ອຍ ແລະ ບໍ່ເປັນພິດກະທັນຫັນ ຕ້ອງໄດ້ຮັບໃບອະນຸຍາດນຳເຂົ້າ.

### 3.6 ມາດຕະການຄຸ້ມຄອງຕໍ່ກັບການນໍາເຂົ້າ ສັດ ແລະ ຜະລິດຕະພັນສັດ (ໝູ ແລະ ສັດປີກ)

ຜ່ານການຄົ້ນຄວ້າລະບຽບການ ແລະ ມາດຕະການຄຸ້ມຄອງການນໍາເຂົ້າ ສັດ ແລະ ຜະລິດຕະພັນສັດ (ໝູ ແລະ ສັດປີກ) ສາມາດສະຫຼຸບໄດ້ດັ່ງນີ້:

**ຂະແໜງການກະສິກໍາ ແລະ ປ່າໄມ້ (ລ້ຽງສັດ ແລະ ການປະມົງ): 04 ມາດຕະການ**

1. ການອອກໃບອະນຸຍາດນໍາເຂົ້າສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າ ກ່ຽວກັບສັດ.
2. ກໍານົດໃຫ້ມີໃບຢັ້ງຢືນຈາກປະເທດຕົ້ນທາງ ເຊັ່ນ: ໃບຢັ້ງຢືນສຸຂະພາບສັດ, ໃບຢັ້ງຢືນສຸຂານາໄມ ຫຼື ໃບຢັ້ງຢືນຄຸນນະພາບ ແລະ ໃບຢັ້ງຢືນມາດຕະຖານດ້ານເຕັກນິກ ກ່ຽວກັບໂຮງຂ້າສັດ ຫຼື ສະຖານທີ່ເກັບຮັກສາ ແລະ ອື່ນໆທີ່ກ່ຽວຂ້ອງ ແລ້ວຍື່ນຄັດຕິດກັບໃບສະເໜີຂໍນໍາເຂົ້າຕໍ່ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກໍາ ແລະ ປ່າໄມ້.
3. ການກວດກາສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າ ກ່ຽວກັບສັດ ນໍາເຂົ້າ.
4. ການນໍາເຂົ້າສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າ ກ່ຽວກັບສັດ ຕ້ອງຜ່ານດ່ານທີ່ກໍານົດໄວ້.

### 3.7 ມາດຕະການຕໍ່ກັບການນໍາເຂົ້າ ປາ, ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ

ຜ່ານການຄົ້ນຄວ້າລະບຽບການ ແລະ ມາດຕະການຄຸ້ມຄອງການນໍາເຂົ້າ ປາ, ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ສາມາດສະຫຼຸບໄດ້ດັ່ງນີ້:

**ຂະແໜງການກະສິກໍາ ແລະ ປ່າໄມ້ (ລ້ຽງສັດ ແລະ ການປະມົງ): 04 ມາດຕະການ**

1. ການອອກໃບອະນຸຍາດນໍາເຂົ້າ ປາ, ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ.
2. ກໍານົດໃຫ້ມີໃບຢັ້ງຢືນຈາກປະເທດຕົ້ນທາງ ເຊັ່ນ: ໃບໃບຢັ້ງຢືນສຸຂານາໄມ ຫຼື ໃບຢັ້ງຢືນຄຸນນະພາບ ແລະ ໃບຢັ້ງຢືນມາດຕະຖານດ້ານເຕັກນິກ ກ່ຽວກັບ ໂຮງຂ້າສັດ ຫຼື ສະຖານທີ່ເກັບຮັກສາ ແລະ ອື່ນໆທີ່ກ່ຽວຂ້ອງ ແລ້ວຍື່ນຄັດຕິດກັບໃບສະເໜີຂໍນໍາເຂົ້າຕໍ່ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກໍາ ແລະ ປ່າໄມ້.
3. ການກວດກາ ປາ, ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ນໍາເຂົ້າ.
4. ການນໍາເຂົ້າ ປາ, ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ຕ້ອງຜ່ານດ່ານທີ່ກໍານົດໄວ້.

### 3.8 ມາດຕະການຕໍ່ກັບການນໍາເຂົ້າ ອາຫານສັດ

ຜ່ານການຄົ້ນຄວ້າລະບຽບການ ແລະ ມາດຕະການຄຸ້ມຄອງການນໍາເຂົ້າ ອາຫານສັດ ສາມາດສະຫຼຸບໄດ້ດັ່ງນີ້:

**ຂະແໜງການກະສິກໍາ ແລະ ປ່າໄມ້ (ລ້ຽງສັດ ແລະ ການປະມົງ): 08 ມາດຕະການ**

1. ການອອກໃບອະນຸຍາດນໍາເຂົ້າ ອາຫານສັດ.
2. ກໍານົດໃຫ້ຜູ້ນໍາເຂົ້າຕ້ອງຂຶ້ນທະບຽນຜູ້ນໍາເຂົ້າ ອາຫານສັດ.
3. ກໍານົດໃຫ້ອາຫານສັດນໍາເຂົ້າ ຕ້ອງໄດ້ຮັບການຈົດທະບຽນ.
4. ອາຫານສັດນໍາເຂົ້າ ຕ້ອງໄດ້ຮັບການຫຸ້ມຫໍ່.
5. ອາຫານສັດນໍາເຂົ້າ ຕ້ອງໄດ້ຮັບການຕິດສະຫຼາກ.
6. ການນໍາເຂົ້າອາຫານສັດ ຕ້ອງຜ່ານດ່ານທີ່ກໍານົດໄວ້.
7. ອາຫານສັດນໍາເຂົ້າ ຕ້ອງໄດ້ຮັບການເກັບຮັກສາ.
8. ອາຫານສັດນໍາເຂົ້າ ຕ້ອງໄດ້ຮັບການກວດກາ.

### 3.9 ມາດຕະການຕໍ່ກັບອາຫານ ແລະ ນໍ້າດື່ມ

ຜ່ານການຄົ້ນຄວ້າລະບຽບການ ແລະ ມາດຕະການຄຸ້ມຄອງການນໍາເຂົ້າ ອາຫານ ແລະ ນໍ້າດື່ມ ສາມາດສະຫຼຸບໄດ້ດັ່ງນີ້:

**ຂະແໜງການສາທາລະນະສຸກ (ອາຫານ ແລະ ຢາ): 06 ມາດຕະການ**

1. ການຕິດສະຫຼາກອາຫານ ແລະ ຜະລິດຕະພັນອາຫານນໍາເຂົ້າ.
2. ການອອກໃບອະນຸຍາດນໍາເຂົ້າ ອາຫານ ແລະ ຜະລິດຕະພັນອາຫານ.
3. ກໍານົດໃຫ້ມີໃບຢັ້ງຢືນຄຸນນະພາບ ແລະ/ຫຼື ຄວາມປອດໄພທາງດ້ານອາຫານ ຈາກປະເທດຕົ້ນທາງ.
4. ການຈົດທະບຽນອາຫານນໍາເຂົ້າ ທີ່ມີຄວາມສ່ຽງ.
5. ການກວດກາອາຫານ ແລະ ຜະລິດຕະພັນອາຫານນໍາເຂົ້າ.
6. ອາຫານ ແລະ ຜະລິດຕະພັນອາຫານນໍາເຂົ້າ ຕ້ອງຜ່ານດ່ານທີ່ກໍານົດໄວ້.

### 3.10 <u>ມາດຕະການລວມຕໍ່ກັບການນໍາເຂົ້າ ແລະ ຈໍາໜ່າຍ ສິນຄ້າ</u>

ຜ່ານການຄົ້ນຄວ້າລະບຽບການ ແລະ ມາດຕະການຄຸ້ມຄອງການນໍາເຂົ້າ ແລະ ຈໍາໜ່າຍສິນຄ້າ ສາມາດສະຫຼຸບໄດ້ດັ່ງນີ້:

**<u>ຂະແໜງການອຸດສາຫະກໍາ ແລະ ການຄ້າ (ການຄ້າພາຍໃນ)</u>:**

1. ການນໍາເຂົ້າສິນຄ້າ ເພື່ອມາຂາຍ, ຈໍາໜ່າຍ ຕ້ອງມີຄຸນນະພາບ, ຄວາມປອດໄພ ແລະ ລາຄາ ສົມເຫດສົມຜົນ.
2. ການນໍາເຂົ້າສິນຄ້າ ເພື່ອມາຂາຍ, ຈໍາໜ່າຍ ຕ້ອງຕິດສະຫຼາກເປັນພາສາລາວ.

*ລາຍລະອຽດຂອງມາດຕະການຄຸ້ມຄອງການນໍາເຂົ້າ ແມ່ນຢູ່ເອກະສານຊ້ອນທ້າຍ 01. ສໍາລັບ ຂັ້ນຕອນ ແລະ ເອກະສານປະກອບ ສໍາລັບການອອກອະນຸຍາດ ຫຼື ຢັ້ງຢືນ ການນໍາເຂົ້າ ແມ່ນຢູ່ ໃນເອກະສານຊ້ອນທ້າຍ 02 ຂອງຄູ່ມືສະບັບນີ້.*

## IV. <u>ສະຫຼຸບຕີລາຄາ</u>

ຜ່ານການຄົ້ນຄວ້າບັນດາເອກະສານນິຕິກໍາທີ່ມີຢູ່ ແລະ ການລົງເກັບກໍາຂໍ້ມູນຕົວຈິງ ກ່ຽວກັບການນໍາເຂົ້າສິນຄ້າປະເພດອຸປະໂພກ-ບໍລິໂພກ ສາມາດສະຫຼຸບຕີລາຄາໄດ້ວ່າ: ການບັງຄັບໃຊ້ບັນດາລະບຽບການ ແລະ ມາດຕະການຄຸ້ມຄອງການນໍາເຂົ້າ ທີ່ຂະແໜງການລັດທີ່ກ່ຽວຂ້ອງເປັນຜູ້ວາງອອກ ຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ ເຊິ່ງປະກົດມີການລັກລອບສິນຄ້ານໍາເຂົ້າຜ່ານດ່ານສາກົນ, ທ້ອງຖິ່ນ ແລະ ປະເພນີ ພ້ອມທັງມີກໍລະນີການແຈ້ງເປັນເຄື່ອງຂອງຕິດຕົວຜູ້ໂດຍສານ ຫຼື ກໍລະນີນໍາເຂົ້າສິນຄ້າຈໍານວນຫຼາຍລາຍການ, ແຕ່ແຈ້ງຈໍານວນ ແລະ ມູນຄ່າບໍ່ສອດຄ່ອງກັບໃບແຈ້ງພາສີ ແລະ ມູນຄ່າຕົວຈິງ ລວມທັງການຊຸກເຊື່ອງສິນຄ້າອື່ນມາພ້ອມ. ພ້ອມດຽວກັນ, ການຕອບສະໜອງການຜະລິດພາຍໃນ ຍັງບໍ່ເປັນລະບົບຄົບຊຸດ ເພື່ອຮັບປະກັນທາງດ້ານຄຸນນະພາບ, ລາຄາ, ປະລິມານ ແລະ ຄອບຄຸມເຂດພື້ນທີ່ ລະຫວ່າງຜູ້ຜະລິດ, ຜູ້ຂາຍຍົກ-ຂາຍຍ່ອຍ ເຮັດໃຫ້ຍັງມີຄວາມຈໍາເປັນນໍາເຂົ້າ ຢູ່.

ສະນັ້ນ, ເພື່ອປົກປ້ອງຊີວິດ, ສຸຂະພາບ ແລະ ຄວາມປອດໄພຂອງຜູ້ບໍລິໂພກພາຍໃນ ລວມທັງເປັນການປົກປ້ອງຜະລິດຕະພັນພາຍໃນ ໃນທາງອ້ອມ, ທຸກພາກສ່ວນທີ່ກ່ຽວຂ້ອງຄວນຈັດຕັ້ງປະຕິບັດບັນດານິຕິກໍາ ແລະ ມາດຕະການຄຸ້ມຄອງການນໍາເຂົ້າ ທີ່ຂະແໜງການກ່ຽວຂ້ອງ ວາງອອກຢ່າງເຂັ້ມງວດ. ນອກຈາກນີ້, ທຸກພາກສ່ວນ ຊ່ວຍໂຄສະນາ, ຊຸກຍູ້ສົ່ງເສີມການຜະລິດ ແລະ ຊົມໃຊ້ ຜະລິດຕະພັນພາຍໃນ ເພື່ອປະກອບສ່ວນສ້າງສາ ແລະ ພັດທະນາເສດຖະກິດ-ສັງຄົມຂອງປະເທດຊາດ ໃຫ້ຂະຫຍາຍຕົວໄປເທື່ອລະກ້າວ.

## ເອກະສານຊ້ອນທ້າຍ 01: ລາຍລະອຽດຂອງມາດຕະການຄຸ້ມຄອງການນໍາເຂົ້າ

### 1. <u>ມາດຕະການຄຸ້ມຄອງການນໍາເຂົ້າ ເຂົ້າກົນ</u>: ມີ 05 ມາດຕະການ

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກໍາ |
|---|---|---|---|
| 1 | ຕ້ອງມີໃບຢັ້ງຢືນສຸຂານາໄມພືດຈາກປະເທດຕົ້ນທາງ | <u>ມາດຕາ 33</u>:<br>ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນໍາເຂົ້າພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ຕ້ອງແຈ້ງເອກະສານທີ່ກ່ຽວຂ້ອງຕໍ່ ດ່ານກັກກັນພືດນັ້ນ ເຊັ່ນ: <u>ໃບຢັ້ງຢືນສຸຂານາໄມພືດ</u> ແລະ ເອກະສານອື່ນ ຕາມການກໍານົດຂອງກະຊວງກະສິກໍາ ແລະ ປ່າໄມ້ ໃນແຕ່ລະໄລຍະ. | ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016 |
| 2 | ການກັກກັນພືດນໍາເຂົ້າທີ່ມີຄວາມສ່ຽງ | <u>ມາດຕາ 37:</u><br>ການນໍາເຂົ້າວັດຖຸຕ້ອງຄວບຄຸມທີ່ມີຄວາມສ່ຽງສູງ ເປັນຕົ້ນແນວພັນພືດ ຕ້ອງຜ່ານ<u>ການແຍກປ່ຽວ ຫຼື ກັກກັນ</u> ຢູ່ສະຖານີກັກກັນພືດຂອງ ລັດ ຫຼື ສະຖານທີ່ສະເພາະໃດໜຶ່ງຂອງຜູ້ປະກອບການ ທີ່ມີເງື່ອນໄຂຄົບຖ້ວນ ເພື່ອຕິດຕາມ, ກວດກາ, ຄົ້ນຄວ້າ, ທົດສອບ, ບໍາບັດ, ກັກ ຫຼື ທໍາລາຍ. | |
| 3 | ການອອກໃບອະນຸຍາດນໍາເຂົ້າພືດ, ຜະລິດຕະພັນພືດ, ວັດຖຸຕ້ອງຄວບຄຸມ ໂດຍຜ່ານການວິໄຈຄວາມສ່ຽງສັດຕູພືດ | <u>ມາດຕາ 14</u>:<br>ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນໍາເຂົ້າພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມທີ່ໄດ້ຢູ່ໃນບັນຊີຕ້ອງຂໍອະນຸຍາດນໍາເຂົ້າ..... ຕ້ອງຍື່ນໃບຄໍາຮ້ອງ ຕໍ່ກົມປູກຝັງຢ່າງໜ້ອຍ ສິບຫ້າວັນ ກ່ອນວັນນໍາເຂົ້າຕົວຈິງ <u>ເພື່ອພິຈາລະນາອອກໃບອະນຸຍາດ</u> ພ້ອມທັງກໍານົດດ່ານກັກກັນພືດສາກົນ ທີ່ອະນຸຍາດໃຫ້ນໍາເຂົ້າ. | ຂໍ້ຕົກລົງ ວ່າດ້ວຍມາດຕະການສຸຂານາໄມພືດສໍາລັບການນໍາເຂົ້າ ແລະ ສົ່ງຜ່ານພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ເລກທີ 2985/ກປ, ລົງວັນທີ 28 ມິຖຸນາ 2019 |

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 4 | ການກວດກາພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ນຳເຂົ້າ | <u>ມາດຕາ 21</u><br>ເມື່ອຊຸດສິນຄ້າ ມາເຖິງດ່ານນຳເຂົ້າທີ່ກຳນົດໄວ້, ເຈົ້າໜ້າທີ່ກັກກັນພືດ <u>ຕ້ອງດຳເນີນການກວດກາ</u>ຊຸດສິນຄ້າທັນທີ ໂດຍສະເພາະສິນຄ້າທີ່ເນົ່າເປື່ອຍງ່າຍ ຕ້ອງດຳເນີນການກວດກາກ່ອນຊຸດສິນຄ້າປະເພດອື່ນ ແລະ ດຳເນີນການກວດກາເອກະສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງຂໍ້ຕົກລົງສະບັບນີ້.<br><br>ພາຍຫຼັງເຈົ້າໜ້າທີ່ກັກກັນພືດ ກວດກາ ແລະ ຢັ້ງຢືນວ່າ ຊຸດສິນຄ້າມີເອກະສານນຳສົ່ງມາຄົບຖ້ວນ ແລະ ປະຕິບັດຖືກຕ້ອງຕາມເງື່ອນໄຂດ້ານສຸຂານາໄມພືດ ຂອງ ສປປ ລາວ ແລ້ວເຈົ້າໜ້າທີ່ກັກກັນພືດ ຕ້ອງຢັ້ງຢືນ ແລະ ປ່ອຍສິນຄ້າທັນທີຕາມລະບຽບການ..... | ຂໍ້ຕົກລົງ ວ່າດ້ວຍ ມາດຕະການສຸຂານາໄມພືດ ສຳລັບການນຳເຂົ້າ ແລະ ສົ່ງຜ່ານພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ເລກທີ 2985/ກປ, ລົງວັນທີ 28 ມິຖຸນາ 2019 – (ຕໍ່) |
| 5 | ການອອກໃບອະນຸຍາດນຳເຂົ້າ ເຂົ້າກິນ | <u>ມາດຕາ 5</u>:<br>ການນຳເຂົ້າ ແລະ ສົ່ງອອກ ເຂົ້າ <u>ຕ້ອງໄດ້ຮັບໃບອະນຸຍາດນຳເຂົ້າ ຫຼື ສົ່ງອອກ ເຂົ້າ</u> ຈາກພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.<br><u>ໃນການປະຕິບັດຕົວຈິງ</u>: ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ຕ້ອງໄດ້ປະສານສົມທົບກັບ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ເພື່ອດຸ່ນດ່ຽງຄວາມຕ້ອງການ ແລະ ການສະໜອງ ພາຍໃນເສຍກ່ອນ ຈຶ່ງພິຈາລະນາອອກໃບອະນຸຍາດນຳເຂົ້າ. | ຂໍ້ຕົກລົງ ວ່າດ້ວຍການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ ເຂົ້າ ເລກທີ 0452/ອຄ.ກຂອ, ລົງວັນທີ 01 ມີນາ 2012 |

## 2. ມາດຕະການຄຸ້ມຄອງການນຳເຂົ້າ ພືດ-ຜັກ ແລະ ໝາກໄມ້: ມີ 08 ມາດຕະການ

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 1 | ຕ້ອງມີໃບຢັ້ງຢືນສຸຂານາໄມພືດຈາກປະເທດຕົ້ນທາງ | ມາດຕາ 33:<br>ການນຳເຂົ້າພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ຕ້ອງແຈ້ງເອກະສານທີ່ກ່ຽວຂ້ອງຕໍ່ ດ່ານກັກກັນພືດນັ້ນ ເຊັ່ນ: ໃບຢັ້ງຢືນສຸຂານາໄມພືດ ແລະ ເອກະສານອື່ນ ຕາມການກຳນົດຂອງກະຊວງກະສິກຳ ແລະ ປ່າໄມ້ ໃນແຕ່ລະໄລຍະ. | ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016 |
| 2 | ການກັກກັນພືດນຳເຂົ້າທີ່ມີຄວາມສ່ຽງ | ມາດຕາ 37:<br>ການນຳເຂົ້າວັດຖຸຕ້ອງຄວບຄຸມທີ່ມີຄວາມສ່ຽງສູງ ເປັນຕົ້ນ ແນວພັນພືດ ຕ້ອງຜ່ານການແຍກປ່ຽວ ຫຼື ກັກກັນ ຢູ່ສະຖານີກັກກັນພືດຂອງ ລັດ ຫຼື ສະຖານທີ່ສະເພາະໃດໜຶ່ງຂອງຜູ້ປະກອບການ ທີ່ມີເງື່ອນໄຂຄົບຖ້ວນ ເພື່ອຕິດຕາມ, ກວດກາ, ຄົ້ນຄວ້າ, ທົດສອບ, ບຳບັດ, ກັກ ຫຼື ທຳລາຍ. | |
| 3 | ການອອກໃບອະນຸຍາດນຳເຂົ້າພືດ, ຜະລິດຕະພັນພືດ, ວັດຖຸຕ້ອງຄວບຄຸມ ໂດຍຜ່ານການວິໄຈຄວາມສ່ຽງສັດຕູພືດ | ມາດຕາ 14:<br>ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນຳເຂົ້າພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມທີ່ໄດ້ຢູ່ໃນບັນຊີຕ້ອງຂໍອະນຸຍາດນຳເຂົ້າ.... ຕ້ອງຍື່ນໃບຄຳຮ້ອງ ຕໍ່ກົມປູກຝັງ ຢ່າງໜ້ອຍ ສິບຫ້າວັນ ກ່ອນວັນນຳເຂົ້າຕົວຈິງ ເພື່ອພິຈາລະນາອອກໃບອະນຸຍາດ ພ້ອມທັງກຳນົດດ່ານກັກກັນພືດສາກົນ ທີ່ອະນຸຍາດໃຫ້ນຳເຂົ້າ. | ຂໍ້ຕົກລົງ ວ່າດ້ວຍມາດຕະການສຸຂານາໄມພືດສຳລັບການນຳເຂົ້າ ແລະ ສົ່ງຜ່ານພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ເລກທີ 2985/ກປ, ລົງວັນທີ 28 ມິຖຸນາ 2019 |

<table>
<tr><th>ລ/ດ</th><th>ຊື່ມາດຕະການ</th><th>ລາຍລະອຽດ</th><th>ນິຕິກຳ</th></tr>
<tr><td>4</td><td>ການຕິດສະຫຼາກ ພືດ, ຜະລິດຕະພັນພືດ, ວັດຖຸຕ້ອງຄວບຄຸມ ນຳເຂົ້າ</td><td>ມາດຕາ 13:<br>ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ໂດຍສະເພາະການນຳເຂົ້າພືດ ທີ່ເປັນແນວພັນ, ເຊື້ອພັນພືດ ຫຼື ສິ່ງເນົ່າເປື່ອຍງ່າຍ ແລະ ມີຄວາມສ່ຽງສູງ ຕ້ອງຕິດສະຫຼາກ ໃຫ້ສອດຄ່ອງຕາມຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດ.</td><td rowspan="4">ຂໍ້ຕົກລົງ ວ່າດ້ວຍ ມາດຕະການສຸຂານາໄມພືດ ສຳລັບການນຳເຂົ້າ ແລະ ສົ່ງຜ່ານພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ເລກທີ 2985/ກປ, ລົງວັນທີ 28 ມິຖຸນາ 2019 – (ຕໍ່)</td></tr>
<tr><td>5</td><td>ການກວດກາ ຜັກນຳເຂົ້າ</td><td rowspan="2">ມາດຕາ 9:<br>ກົມປູກຝັງ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ແລະ ດ່ານກັກກັນພືດ ຕ້ອງຄຸ້ມຄອງ ແລະ ກວດກາການນຳເຂົ້າ ພືດຜັກ ແລະ ໝາກໄມ້ສົດ ໃຫ້ສອດຄ່ອງຕາມມາດຕະຖານຄວາມປອດໄພຂອງອາຫານ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ. ສ່ວນຂັ້ນຕອນລະອຽດໄດ້ກຳນົດໄວ້ໃນບົດແນະນຳ ຂອງກົມປູກຝັງ.</td></tr>
<tr><td>6</td><td>ການກວດກາ ໝາກໄມ້ນຳເຂົ້າ</td></tr>
<tr><td>7</td><td>ການນຳເຂົ້າພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ຕ້ອງຜ່ານດ່ານທີ່ກຳນົດໄວ້</td><td>ມາດຕາ 18:<br>ກົມປູກຝັງ ເປັນຜູ້ຄົ້ນຄວ້າ ແລະ ກຳນົດດ່ານກັກກັນພືດສາກົນ ທີ່ໄດ້ມາດຕະຖານໃນການກວດກາການນຳເຂົ້າ ພືດ, ຜະລິດຕະພັນ ພືດ ແລະ ວັດຖຸຕ້ອງຄວບຄຸມ ເພື່ອສະເໜີກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາ ແລະ ປະກາດໃຊ້ໃນແຕ່ລະໄລຍະ .</td></tr>
</table>

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 8 | ການກວດກາພືດ, ຜະລິດຕະພັນພືດ, ແລະ ວັດຖຸຕ້ອງຄວບຄຸມ ນຳເຂົ້າ | <u>ມາດຕາ 21</u><br>ເມື່ອຊຸດສິນຄ້າ ມາເຖິງດ່ານນຳເຂົ້າທີ່ກຳນົດໄວ້, ເຈົ້າໜ້າທີ່ກັກກັນພືດ <u>ຕ້ອງດຳເນີນການກວດກາ</u>ຊຸດສິນຄ້າທັນທີ ໂດຍສະເພາະສິນຄ້າທີ່ເນົ່າເປື່ອຍງ່າຍ ຕ້ອງດຳເນີນການກວດກາກ່ອນຊຸດສິນຄ້າປະເພດອື່ນ ແລະ ດຳເນີນການກວດກາເອກະສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງຂໍ້ຕົກລົງສະບັບນີ້.<br><br>ພາຍຫຼັງເຈົ້າໜ້າທີ່ກັກກັນພືດ ກວດກາ ແລະ ຢັ້ງຢືນວ່າ ຊຸດສິນຄ້າມີເອກະສານນຳສົ່ງມາຄົບຖ້ວນ ແລະ ປະຕິບັດຖືກຕ້ອງຕາມເງື່ອນໄຂດ້ານສຸຂານາໄມພືດ ຂອງ ສປປ ລາວ ແລ້ວເຈົ້າໜ້າທີ່ກັກກັນພືດ ຕ້ອງຢັ້ງຢືນ ແລະ ປ່ອຍສິນຄ້າທັນທີຕາມລະບຽບການ..... | ຂໍ້ຕົກລົງ ວ່າດ້ວຍ ມາດຕະການສຸຂານາໄມພືດ ສຳລັບການນຳເຂົ້າ ແລະ ສົ່ງຜ່ານພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ເລກທີ 2985/ກປ, ລົງວັນທີ 28 ມິຖຸນາ 2019<br>– (ຕໍ່) |

3. <u>ມາດຕະການຄຸ້ມຄອງການນຳເຂົ້າ ຝຸ່ນ</u>: ມີ 06 ມາດຕະການ

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 1 | ການອອກໃບອະນຸຍາດນຳເຂົ້າຝຸ່ນ | ມາດຕະການອອກໃບອະນຸຍາດນຳເຂົ້າ ບໍ່ໄດ້ຖືກກຳນົດຊັດເຈນໃນຂໍ້ຕົກລົງ ເລກທີ 2169/ກປ. ເຖິງຢ່າງໃດກໍ່ຕາມ, ໃນມາດຕາ 23, 24, 26 ແລະ 27 ໄດ້ກຳນົດໃບອະນຸຍາດນຳເຂົ້າ ແມ່ນເອກະສານໜຶ່ງສຳລັບການດຳເນີນທຸລະກິດ ກ່ຽວກັບຝຸ່ນ. ພ້ອມດຽວກັນ, <u>ການອອກອະນຸຍາດໃບອະນຸຍາດນຳເຂົ້າຝຸ່ນ</u> ແມ່ນມອບໃຫ້ສິດໃຫ້ພະແນກກະສິ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ເປັນຜູ້ອອກ ຕາມມາດຕາ 37. | ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຝຸ່ນໃນ ສປປ ລາວ ເລກທີ 2169/ກປ, ລົງວັນທີ 24 ຕຸລາ 2013 |
| 2 | ການຕິດສະຫຼາກຝຸ່ນນຳເຂົ້າ | <u>ມາດຕາ 19:</u><br>ທຸກຜະລິດຕະພັນຝຸ່ນ ທີ່ຜະລິດ, ສົ່ງອອກ, ນຳເຂົ້າ ແລະ ຈຳໜ່າຍໃນ ສປປ ລາວ <u>ຕ້ອງຕິດສະຫຼາກ</u> ທີ່ມີຂໍ້ຄວາມທາງດ້ານວິຊາການເປັນພາສາລາວ.<br><br>ໃນກໍລະນີນຳເຂົ້າມາຈາກຕ່າງປະເທດເພື່ອການຄ້າ ຕ້ອງມີເລກທະບຽນຝຸ່ນ ຈາກປະເທດທີ່ຜະລິດ ແລະ ເລກທະບຽນຝຸ່ນທີ່ຈົດທະບຽນຢູ່ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງຂໍ້ຕົກລົງສະບັບນີ້. | |

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 3 | ການຫຸ້ມຫໍ່ຝຸ່ນນຳເຂົ້າ | ມາດຕາ 18:<br>ການຫຸ້ມຫໍ່ຝຸ່ນ ຕ້ອງບັນຈຸໃນພາຊະນະທີ່ເໝາະສົມ ຕາມຄຸນລັກສະນະຂອງຝຸ່ນ ແລະ ຮັບປະກັນຄວາມປອດໄພໃນເວລານຳເຂົ້າ, ສົ່ງອອກ, ຂົນສົ່ງ, ເກັບຮັກສາ, ຈຳໜ່າຍ ແລະ ນຳໃຊ້ ເພື່ອຮັບປະກັນຄຸນນະພາບຂອງຝຸ່ນ ບໍ່ໃຫ້ເກີດອັນຕະລາຍຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ. | ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຝຸ່ນໃນ ສປປ ລາວ ເລກທີ 2169/ກປ, ລົງວັນທີ 24 ຕຸລາ 2013 |
| 4 | ການຈົດທະບຽນຝຸ່ນນຳເຂົ້າ | ມາດຕາ 29:<br>ຝຸ່ນ ທີ່ຜະລິດ, ສົ່ງອອກ, ນຳເຂົ້າ, ຈຳໜ່າຍ ແລະ ນຳໃຊ້ໃນ ສປປ ລາວ ຕ້ອງໄດ້ຈົດທະບຽນນຳກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້. ສຳລັບຝຸ່ນທີ່ຈະນຳເຂົ້າ ຕ້ອງໄດ້ຈົດທະບຽນຈາກປະເທດສົ່ງອອກ ຫຼື ປະເທດຕົ້ນທາງ ກ່ອນ. | |
| 5 | ມາດຕະຖານຝຸ່ນນຳເຂົ້າ | ມາດຕາ 8-17<br>ໄດ້ກຳນົດມາດຕະຖານຝຸ່ນເຄມີ, ຝຸ່ນອົງຄະທາດ, ຝຸ່ນຊີວະພາບ, ຝຸ່ນອົງຄະທາດຊີວະພາບ, ຝຸ່ນອົງຄະທາດເຄມີ ພ້ອມທັງເກນຄາດເຄື່ອນທາດອາຫານຫຼັກ ແລະ ຝຸ່ນປະເພດຕ່າງໆທີ່ມີລັກສະນະປອມ ແລະ ບໍ່ໄດ້ມາດຕະຖານ ຢ່າງຊັດເຈນ. | |
| 6 | ການກວດກາຝຸ່ນນຳເຂົ້າ | ມາດຕາ 40:<br>ຊື່ຂອງມາດຕາ 40 ແມ່ນການກວດກາຝຸ່ນ ແຕ່ເນື້ອໃນຂອງມາດຕາດັ່ງກ່າວ ບໍ່ໄດ້ມີຄຳສັບໃດ ທີ່ກຳນົດໃຫ້ມີກວດກາຝຸ່ນນຳເຂົ້າ. ແຕ່ໃນການຈັດຕັ້ງປະຕິບັດ ແມ່ນມີການກວດກາຝຸ່ນນຳເຂົ້າ ໂດຍເຈົ້າໜ້າທີ່ກັກກັນພືດປະຈຳດ່ານ. | |

## 4. <u>ມາດຕະການຄຸ້ມຄອງການນຳເຂົ້າ ຢາປາບສັດຕູພືດ</u>: ມີ 08 ມາດຕະການ

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 1 | ການຂົນສົ່ງ ແລະ ການເກັບຮັກສາ ຢາປາບສັດຕູພືດ ນຳເຂົ້າ | <u>ມາດຕາ 32, ວັກ 2</u>:<br>ສຳລັບ<u>ການຂົນສົ່ງຢາປາບສັດຕູພືດ ລວມທັງສິ່ງເສດເຫຼືອຢາປາບສັດຕູພືດ ທີ່ນຳເຂົ້າ</u>, ສົ່ງອອກ, ສົ່ງຜ່ານ, ຜະລິດ, ຈຳໜ່າຍ ແລະ ນຳໃຊ້ ຕ້ອງປະຕິບັດຕາມເງື່ອນໄຂດັ່ງນີ້:<br>1. ມີຜູ້ຂັບຂີ່ທີ່ມີປະສົບການ ແລະ ຄວາມຮູ້ພື້ນຖານ ກ່ຽວກັບການປ້ອງກັນ ແລະ ຮັກສາຄວາມປອດໄພ ກ່ຽວກັບຢາປາບສັດຕູພືດ;<br>2. ມີລົດຂົນສົ່ງ ຢາປາບສັດຕູພືດ ແລະ ສິ່ງເສດເຫຼືອຢາປາບສັດຕູພືດສະເພາະ ຕາມມາດຕະຖານເຕັກນິກທີ່ກ່ຽວຂ້ອງ;<br>3. ມີຄູ່ມື ແລະ ອຸປະກອນປ້ອງກັນຄວາມປອດໄພ;<br>4. ຂົນສົ່ງຕາມເສັ້ນທາງ ທີ່ໄດ້ຮັບອະນຸຍາດ;<br>5. ສຳເນົາໃບອະນຸຍາດນຳເຂົ້າ ແລະ ເອກະສານອື່ນທີ່ກ່ຽວຂ້ອງຂອງຜູ້ດຳເນີນທຸລະກິດນຳເຂົ້າ ແລະ ຈຳໜ່າຍ ໄປພ້ອມກັບການຂົນສົ່ງຢາປາບສັດຕູພືດ;<br>6. ມີລົດຂົນສົ່ງຢາປາບສັດຕູພືດ ທີ່ປິດແຈບ ແລະ ມີປ້າຍເຕືອນອັນຕະລາຍ;<br>7. ສຳລັບຂະບວນລົດຂົນສົ່ງຢາປາບສັດຕູພືດ ຕ້ອງມີລົດນຳຂະບວນຖືກຕ້ອງ ຕາມລະບຽບການທີ່ກ່ຽວຂ້ອງ.<br>8. ແລະ ເງື່ອນໄຂອື່ນ. | ດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ເລກທີ 258/ລບ, ລົງວັນທີ 24 ສິງຫາ 2017 |

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| | | ມາດຕາ 33, ວັກ 2:<br>ນອກຈາກນັ້ນ ສຳລັບຜູ້ຜະລິດ, ຜູ້ນຳເຂົ້າ ແລະ ຜູ້ຈຳໜ່າຍ ຢາປາບສັດຕູພືດ ຕ້ອງມີ:<br>1. ສາງເກັບມ້ຽນສະເພາະ ທີ່ຫ່າງໄກຈາກເດັກນ້ອຍ, ຊຸມຊົນ, ໂຮງຮຽນ, ໂຮງໝໍ, ຕະຫຼາດ, ແຫຼ່ງນ້ຳ ແລະ ຖືກຕ້ອງຕາມມາດຕະຖານເຕັກນິກ, ມີລະບົບການເກັບຮັກສາທີ່ປອດໄພ ລວມທັງມາດຕະການບົວລະບັດຮັກສາ, ມາດຕະການປ້ອງກັນ, ຟື້ນຟູ, ກຳຈັດຄວາມເປັນພິດ ແລະ ອັກຄີໄພ;<br>2. ການຝຶກອົບຮົມ ໃຫ້ແກ່ແຮງງານເຮັດວຽກໃນສາງເກັບມ້ຽນ ກ່ຽວກັບການປ້ອງກັນ ແລະ ຮັກສາຄວາມປອດໄພ ແລະ ມີປ້າຍເຕືອນອັນຕະລາຍ ຕິດໄວ້ໃນສາງເກັບມ້ຽນ;<br>3. ບັນທຶກຂໍ້ມູນການເກັບຮັກສາຢາປາບສັດຕູພືດ ແລະ ລາຍງານເປັນປົກກະຕິ ໃຫ້ອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ຊາບ;<br>4. ແລະ ເງື່ອນໄຂອື່ນ. | ດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ເລກທີ 258/ລບ, ລົງວັນທີ 24 ສິງຫາ 2017 – (ຕໍ່) |
| 2 | ການຕິດສະຫຼາກ ຢາປາບສັດຕູພືດນຳເຂົ້າ | ມາດຕາ 26:<br>ຢາປາບສັດຕູພືດທຸກຊະນິດ ທີ່ຜະລິດ, ນຳເຂົ້າ ແລະ ຈຳໜ່າຍ ໃນ ສປປ ລາວ ຕ້ອງມີສະຫຼາກເປັນຮູບພາບ, ຂໍ້ຄວາມ ຫຼື ເປັນຕົວອັກສອນ ພາສາລາວ ແລະ  ພາສາຕ່າງປະເທດ ເພື່ອສະແດງ, ຊີ້ບອກຄວາມເປັນອັນຕະລາຍ, ຄຳແນະນຳໃນ | |

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| | | ການນຳໃຊ້ ແລະ ການປ້ອງກັນຄວາມປອດໄພ ຂອງຢາປາບສັດຕູພືດ. ສຳລັບຮູບພາບ ແລະ ເນື້ອໃນຂອງສະຫຼາກ ແມ່ນກະຊວງກະສິກຳ ແລະ ປ່າໄມ້ເປັນຜູ້ກຳນົດ.<br><br>ການຕິດສະຫຼາກ ຕ້ອງຕິດແນບ ຫຼື ພິມໃສ່ກັບພາຊະນະບັນຈຸຢາປາບສັດຕູພືດໂດຍກົງ ແລະ ຕ້ອງຕິດໃຫ້ມີຄວາມແໜ້ນໜາ, ທົນທານ ແລະ ໝັ້ນໝຽວ. | ດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ເລກທີ 258/ລບ, ລົງວັນທີ 24 ສິງຫາ 2017 – (ຕໍ່) |
| 3 | ການຫຸ້ມຫໍ່ ຢາປາບສັດຕູພືດນຳເຂົ້າ | <u>ມາດຕາ 25</u>:<br>ພາຊະນະບັນຈຸ ແລະ <u>ການຫຸ້ມຫໍ່ຢາປາບສັດຕູພືດ</u> ຕ້ອງຮັບປະກັນ ດັ່ງນີ້:<br><br>1. ມີຄວາມແຂງແກ່ນ, ທົນທານ ແລະ ຮັບປະກັນບໍ່ໃຫ້ຮົ່ວຊຶມ;<br>2. ບໍ່ເປື່ອຍ ແລະ ບໍ່ສົ່ງຜົນກະທົບຕໍ່ຄຸນນະພາບ ຂອງຢາປາບສັດຕູພືດ ພາຍໃຕ້ສະພາບປົກກະຕິຂອງການເກັບຮັກສາ ແລະ ນຳໃຊ້ ໃນໄລຍະເວລາທີ່ໄດ້ກຳນົດ;<br>3. ບໍ່ຄ້າຍຄືກັບພາຊະນະບັນຈຸ ແລະ ການຫຸ້ມຫໍ່ອາຫານ ແລະ ເຄື່ອງດື່ມ;<br>4. ມີຝາປິດແໜ້ນ ເພື່ອບໍ່ໃຫ້ເດັກນ້ອຍເປີດໄດ້;<br>5. ມີຄວາມເໝາະສົມກັບແຕ່ລະຊະນິດຢາປາບສັດຕູພືດ;<br>6. ມີຄວາມປອດໄພ ໃນເວລາເກັບຮັກສາ ແລະ ນຳໃຊ້. | |

<table>
<tr><th>ລ/ດ</th><th>ຊື່ມາດຕະການ</th><th>ລາຍລະອຽດ</th><th>ນິຕິກຳ</th></tr>
<tr><td>4</td><td>ຢາປາບສັດຕູພືດ ຕ້ອງໄດ້ນຳເຂົ້າຜ່ານດ່ານທີ່ກຳນົດໄວ້</td><td rowspan="2">ມາດຕາ 29, ຂໍ້ 3:<br>ການນຳເຂົ້າຢາປາບສັດຕູພືດ ຕ້ອງປະຕິບັດ ດັ່ງນີ້:<br>3. ນຳເຂົ້າຕາມດ່ານ ທີ່ກຳນົດໄວ້ໃນໃບອະນຸຍາດນຳເຂົ້າ ແລະ ໄດ້ຮັບການກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນຂອງຢາປາບສັດຕູພືດຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ.</td><td rowspan="3">ດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ເລກທີ 258/ລບ, ລົງວັນທີ 24 ສິງຫາ 2017 – (ຕໍ່)</td></tr>
<tr><td>5</td><td>ການກວດກາ ຢາປາບສັດຕູພືດນຳເຂົ້າ</td></tr>
<tr><td>6</td><td>ກຳນົດໃຫ້ຜູ້ນຳເຂົ້າຕ້ອງຂຶ້ນທະບຽນຜູ້ນຳເຂົ້າຢາປາບສັດຕູພືດ</td><td>ມາດຕາ 38:<br>ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດ ກ່ຽວກັບຢາປາບສັດຕູພືດ ຕ້ອງໄດ້ຂຶ້ນທະບຽນວິສາຫະກິດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມກົດໝາຍວ່າດ້ວຍວິສາຫະກິດ, ພາຍຫຼັງໄດ້ທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດເຄື່ອນໄຫວກິດຈະການ ກ່ຽວກັບຢາປາບສັດຕູພືດ ນຳຂະແໜງການກະສິກຳ ແລະ ປ່າໄມ້.<br>ມາດຕາ 42:<br>ຜູ້ທີ່ຈະດຳເນີນທຸລະກິດການນຳເຂົ້າ ແລະ ຈຳໜ່າຍຢາປາບສັດຕູພືດ ຕ້ອງມີວິຊາການທີ່ໄດ້ຮັບໃບປະກາດສະນີຍາບັດ ຫຼື ໃບຢັ້ງຢືນປະກອບວິຊາຊີບຈຳໜ່າຍຢາປາບສັດຕູພືດ ທີ່ຮັບຮອງຈາກກະຊວງກະສິກຳ ແລະ ປ່າໄມ້, ມີສາງເກັບມ້ຽນ, ສະຖານທີ່ຈຳໜ່າຍສະເພາະ, ພາຫະນະຂົນສົ່ງ, ຕູ້ເກັບມ້ຽນຢາປາບສັດຕູພືດສະເພາະ, ອຸປະກອນຮັບໃຊ້, ເຄື່ອງໃຊ້ຫ້ອງການ, ລະບົບຮັກສາຄວາມປອດໄພ ແລະ ປິ່ນປົວເບື້ອງຕົ້ນ ຕາມມາດຕະຖານເຕັກນິກ ທີ່ຂະແໜງການກ່ຽວຂ້ອງກຳນົດ.</td></tr>
</table>

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 7 | ຢາປາບສັດຕູພືດ ທີ່ເປັນອັນຕະລາຍປານກາງ, ໜ້ອຍ ແລະ ບໍ່ເປັນພິດກະທັນຫັນ ຕ້ອງໄດ້ຮັບການຈົດທະບຽນ. | <u>ມາດຕາ 15, ວັກ 1</u>:<br>ຜູ້ທີ່ມີຈຸດປະສົງ ຜະລິດ ຫຼື ນຳເຂົ້າ ເພື່ອຈຳໜ່າຍ ແລະ ນຳໃຊ້ ຢາປາບສັດຕູພືດຢູ່ ສປປ ລາວ ຕ້ອງຍື່ນຄຳຮ້ອງພ້ອມດ້ວຍ ເອກະສານປະກອບ ຕໍ່ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ <u>ເພື່ອຂໍຂຶ້ນທະບຽນວິຊາການຢາປາບສັດຕູພືດ</u>.<br><u>ມາດຕາ 17</u>:<br>ຜູ້ທີ່ມີຈຸດປະສົງ<u>ຂຶ້ນທະບຽນວິຊາການຢາປາບສັດຕູພືດ</u> ຕ້ອງມີເງື່ອນໄຂ ດັ່ງນີ້:<br>1. ໄດ້ຮັບອະນຸຍາດດຳເນີນທຸລະກິດ ກ່ຽວກັບການຜະລິດ ຫຼື ການນຳເຂົ້າ ຢາປາບສັດຕູພືດ ໃນ ສປປ ລາວ;<br>2. ເປັນຢາປາບສັດຕູພືດ ທີ່ຂຶ້ນທະບຽນຈາກປະເທດສົ່ງອອກ;<br>3. ໄດ້ຮັບການມອບສິດຈາກຜູ້ຜະລິດຢາປາບສັດຕູພືດ ຂອງປະເທດສົ່ງອອກ;<br>4. ມີບົດປະເມີນ ກ່ຽວກັບປະສິດທິພາບ, ຄຸນລັກສະນະ ແລະ ຄວາມປອດໄພຂອງຢາປາບສັດຕູພືດ;<br>5. ມີແຜນການທົດສອບ ກ່ຽວກັບຄຸນນະພາບ ແລະ ປະສິດທິພາບຢາປາບສັດຕູພືດຢູ່ຫ້ອງວິໄຈ ແລະ ພາກສະໜາມ ໃນພື້ນທີ່ເປົ້າໝາຍ;<br>6. ມາດຕະຖານຕົວຢ່າງຢາປາບສັດຕູພືດ ແລະ ຕົວຢ່າງຜະລິດຕະພັນ. | ດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ເລກທີ 258/ລບ, ລົງວັນທີ 24 ສິງຫາ 2017 – (ຕໍ່) |

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 8 | ຢາປາບສັດຕູພືດ ທີ່ເປັນອັນຕະລາຍປານກາງ, ໜ້ອຍ ແລະ ບໍ່ເປັນພິດກະທັນຫັນ ຕ້ອງໄດ້ຮັບໃບອະນຸຍາດນຳເຂົ້າ | <u>ມາດຕາ 11, ວັກ 2</u>:<br>ຢາປາບສັດຕູພືດອັນຕະລາຍປານກາງ ສາມາດຜະລິດ, <u>ນຳເຂົ້າ</u>, ສົ່ງອອກ, ສົ່ງຜ່ານ, ຈຳໜ່າຍ, ນຳໃຊ້ ແລະ ຄອບຄອງ ໂດຍຂຶ້ນທະບຽນ ແລະ <u>ຂໍອະນຸຍາດ</u>ນຳຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຕ້ອງຢູ່ພາຍໃຕ້ການຄຸ້ມຄອງຕາມລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ.<br><br><u>ມາດຕາ 12, ວັກ 2</u>:<br>ຢາປາບສັດຕູພືດທີ່ເປັນອັນຕະລາຍໜ້ອຍ ສາມາດຜະລິດ, <u>ນຳເຂົ້າ</u>, ຈຳໜ່າຍ, ສົ່ງຜ່ານ, ສົ່ງອອກ, ນຳໃຊ້ ແລະ ຄອບຄອງ ໂດຍຂຶ້ນທະບຽນ ແລະ <u>ຂໍອະນຸຍາດ</u> ນຳອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ແລະ ຕ້ອງປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.<br><br><u>ມາດຕາ 13, ວັກ 2</u>:<br>ຢາປາບສັດຕູພືດອັນຕະລາຍບໍ່ເປັນພິດກະທັນຫັນ ສາມາດຜະລິດ, <u>ນຳເຂົ້າ</u>, ຈຳໜ່າຍ, ສົ່ງຜ່ານ, ສົ່ງອອກ, ນຳໃຊ້ ແລະ ຄອບຄອງ ໂດຍຂຶ້ນທະບຽນ ແລະ <u>ຂໍອະນຸຍາດ</u> ນຳຂະແໜງການກະສິກຳ ແລະ ປ່າໄມ້ ຍົກເວັ້ນຢາປາບສັດຕູພືດຊີວະພາບທີ່ມີຄວາມປອດໄພຕໍ່ສຸຂະພາບ ຂອງຄົນ, ສັດ ແລະ ສິ່ງແວດລ້ອມ ຊຶ່ງບໍ່ໄດ້ບັນຈຸໃສ່ພາຊະນະເພື່ອຈຳໜ່າຍ. | ດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ເລກທີ 258/ລບ, ລົງວັນທີ 24 ສິງຫາ 2017 – (ຕໍ່) |

5. <u>ມາດຕະການຄຸ້ມຄອງການນຳເຂົ້າ ສັດ ແລະ ຜະລິດຕະພັນສັດ (ໝູ ແລະ ສັດປີກ)</u>: ມີ 04 ມາດຕະການ

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 1 | ການນຳເຂົ້າສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າ ກ່ຽວກັບສັດ ຕ້ອງຜ່ານດ່ານທີ່ກຳນົດໄວ້ | <u>ຂໍ້ 4, ມາດຕາ 18</u>:<br>ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງນຳເຂົ້າສັດ, ຜະລິດຕະພັນສັດ ແລະ/ຫຼື ຜະລິດຕະພັນສິນຄ້າກ່ຽວກັບສັດ ມາໃນ ສປປ ລາວ ໃຫ້ປະຕິບັດຕາມເງື່ອນໄຂດັ່ງນີ້:<br>4. ນຳເຂົ້າສັດ, ຜະລິດຕະພັນສັດ ແລະ/ຫຼື ຜະລິດຕະພັນສິນຄ້າກ່ຽວກັບສັດ ຕາມ<u>ດ່ານນຳເຂົ້າທີ່ກຳນົດ</u> ໂດຍອີງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ. | ດຳລັດ ວ່າດ້ວຍການຄຸ້ມຄອງ ການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າ ກ່ຽວກັບ ສັດ ເລກທີ 230/ລບ, ລົງວັນທີ 04 ມິຖຸນາ 2012 |
| 2 | ການອອກໃບອະນຸຍາດນຳເຂົ້າສັດ ແລະ ຜະລິດຕະພັນສິນຄ້າ ກ່ຽວກັບສັດ | <u>ມາດຕາ 6</u>:<br>ສັດ ແລະ ຜະລິດຕະພັນສັດ ທີ່<u>ຕ້ອງໄດ້ຂໍອະນຸຍາດນຳເຂົ້າ</u> ແມ່ນປະເພດສັດ ແລະ ຜະລິດຕະພັນສັດ ເພື່ອຈຸດປະສົງເປັນທຸລະກິດ-ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ 1 ຂອງຂໍ້ຕົກລົງສະບັບນີ້.<br><br><u>ວັກ 1, ຂໍ້ 1, ມາດຕາ 7</u>:<br>ເອກະສານສຳລັບການຂໍໃບອະນຸຍາດນຳເຂົ້າ ມີດັ່ງນີ້:<br>1. ໃບຄຳຮ້ອງຂໍອະນຸຍາດນຳເຂົ້າ ຕາມທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ 3 ຂອງຂໍ້ຕົກລົງສະບັບນີ້. | ຂໍ້ຕົກລົງ ວ່າດ້ວຍການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ເລກທີ 0795/ກປ, ລົງວັນທີ 18 ເມສາ 2019 |

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 3 | ຕ້ອງມີໃບຢັ້ງຢືນສຸຂະພາບສັດ ຫຼື ໃບຢັ້ງຢືນສຸຂານາໄມ ຜະລິດຕະພັນສິນຄ້າ ກ່ຽວກັບສັດ ຈາກປະເທດຕົ້ນທາງ | ວັກ 2, ຂໍ້ 1, ມາດຕາ 7:<br>ເອກະສານເພີ່ມເຕີມອື່ນ ໃນມື້ນຳສິນຄ້າເຂົ້າຕົວຈິງ ມີດັ່ງນີ້:<br>1. ໃບຢັ້ງຢືນສຸຂະພາບສັດ ຫຼື ສຸຂານາໄມສັດ ຈາກອົງການຄຸ້ມຄອງວຽກງານສັດຕະວະແພດຂອງປະເທດຕົ້ນທາງ;<br>2. ສຳເນົາ ໃບຂົນສົ່ງສິນຄ້າ ຫຼື Bill of Lading/Airway Bill ກໍລະນີຂົນສົ່ງທາງທ່າເຮືອ ຫຼື ເຮືອບິນ;<br>3. ສຳເນົາ ໃບຢັ້ງຢືນກຳມະພັນສັດ ຖ້ານຳສັດມາເປັນແນວພັນ;<br>4. ສຳເນົາ ໃບຢັ້ງຢືນການສັກຢາກັນພະຍາດສັດ (ໃນກໍລະນີທີ່ ສປປ ລາວ ຮຽກຮ້ອງ). | ຂໍ້ຕົກລົງ ວ່າດ້ວຍການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ເລກທີ 0795/ກປ, ລົງວັນທີ 18 ເມສາ 2019 – (ຕໍ່) |
| 4 | ການກວດກາ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າ ກ່ຽວກັບສັດ ນຳເຂົ້າ | ມາດຕາ 9:<br>ເວລານຳເຂົ້າສັດ ແລະ ຜະລິດຕະພັນສັດຢູ່ດ່ານ ໃຫ້ປະຕິບັດດັ່ງນີ້:<br>1. ຜູ້ນຳເຂົ້າ ແຈ້ງໃບຢັ້ງຢືນການກວດກາເອກະສານຢູ່ດ່ານ, ລາຍການ ສັດ ແລະ ຜະລິດຕະພັນສັດ ຕໍ່ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ;<br>2. ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ບັນທຶກຂໍ້ມູນກ່ຽວກັບສັດ ແລະ ຜະລິດຕະພັນສັດ ເຂົ້າໃນຖານຂໍ້ມູນ ພ້ອມທັງ ດຳເນີນການກວດກາ ແລະ ອອກໃບຢັ້ງຢືນການກວດກາ ຕາມແບບພິມທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍ 6 ຂອງຂໍ້ຕົກລົງສະບັບນີ້, ສຳເນົາໄວ້ ໜຶ່ງສະບັບ ແລະ ແຈ້ງໃຫ້ຜູ້ນຳເຂົ້າຈ່າຍຄ່າທຳນຽມ ແລະ ບໍລິການຕາມລະບຽບການ ແລ້ວຈຶ່ງອະນຸຍາດໃຫ້ເຄື່ອນຍ້າຍສິນຄ້າໄປຫາພາກສ່ວນພາສີ...... | |

6. ມາດຕະການຄຸ້ມຄອງການນຳເຂົ້າ ປາ, ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ: ມີ 04 ມາດຕະການ

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 1 | ການອອກໃບອະນຸຍາດນຳເຂົ້າ ປາ, ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ | ມາດຕາ 6:<br>ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີຈຸດປະສົງນຳເຂົ້າ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ທີ່ໄດ້ກຳນົດໄວ້ໃນ ເອກະສານຊ້ອນທ້າຍ 1 ຂອງຂໍ້ຕົກລົງສະບັບນີ້ ເພື່ອເປົ້າໝາຍ ທາງການຄ້າ ຕ້ອງໄດ້ຮັບອະນຸຍາດ ຈາກກົມລ້ຽງສັດ ແລະ ການປະມົງ. | ຂໍ້ຕົກລົງ ວ່າດ້ວຍການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ເລກ ທີ 4211/ກປ, ລົງວັນທີ 29 ພະຈິກ 2019 |
| 2 | ຕ້ອງມີໃບຢັ້ງຢືນສຸຂະພາບສັດ ຫຼື ໃບຢັ້ງຢືນ ສຸຂານາໄມຜະລິດຕະພັນສິນຄ້າ ກ່ຽວກັບສັດ ຈາກປະເທດຕົ້ນທາງ | ຂໍ້ 2, ມາດຕາ 7:<br>ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງນຳເຂົ້າ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ມາໃນ ສປປ ລາວ ໃຫ້ ປະຕິບັດຕາມເງື່ອນໄຂດັ່ງນີ້:<br>1. ມີໃບຢັ້ງຢືນສຸຂະພາບສັດນ້ຳ ຫຼື ໃບຢັ້ງຢືນສຸຂານາໄມ ຜະລິດຕະພັນສັດນ້ຳ ຈາກອົງການຄຸ້ມຄອງວຽກງານ ສັດຕະວະແພດຂອງປະເທດຕົ້ນທາງ. | |
| 3 | ການກວດກາ ປາ, ສັດນ້ຳ ແລະ ຜະລິດຕະພັນ ສັດນ້ຳ ນຳເຂົ້າ | ມາດຕາ 10:<br>ໃນເວລານຳເຂົ້າສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ຢູ່ດ່ານ ໃຫ້ ປະຕິບັດດັ່ງນີ້: | |

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 3 (ຕໍ່) | ການກວດກາ ປາ, ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ນຳເຂົ້າ – (ຕໍ່) | 1. ຜູ້ນຳເຂົ້າ ແຈ້ງໃບຢັ້ງຢືນການກວດກາເອກະສານຢູ່ດ່ານ, ລາຍການສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ຕໍ່ເຈົ້າໜ້າທີ່ສັດຕະວະແພດ ປະຈຳດ່ານ;<br>2. ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ບັນທຶກຂໍ້ມູນກ່ຽວກັບສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ເຂົ້າໃນຖານຂໍ້ມູນ ແລ້ວດຳເນີນການກວດກາ ແລະ ອອກໃບຢັ້ງຢືນການກວດກາຢູ່ດ່ານ ຕາມແບບພິມທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍ 6 ຂອງຂໍ້ຕົກລົງສະບັບນີ້ ພ້ອມທັງສຳເນົາໄວ້ໜຶ່ງສະບັບ ແລະ ແຈ້ງໃຫ້ຜູ້ນຳເຂົ້າ ຈ່າຍຄ່າທຳນຽມ ແລະ ບໍລິການຕາມລະບຽບການ ແລ້ວຈຶ່ງອະນຸຍາດໃຫ້ເຄື່ອນຍ້າຍສິນຄ້າໄປຫາ ພາກສ່ວນພາສີ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ. | ຂໍ້ຕົກລົງ ວ່າດ້ວຍການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ເລກທີ 4211/ກປ, ລົງວັນທີ 29 ພະຈິກ 2019 – (ຕໍ່) |
| 4 | ການນຳເຂົ້າ ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ຕ້ອງຜ່ານດ່ານທີ່ກຳນົດໄວ້ | ມາດຕາ 7:<br>ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງນຳເຂົ້າ ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ມາໃນ ສປປ ລາວ ໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:<br>4. ນຳເຂົ້າສັດນໍ້າ ແລະ ຜະລິດຕະພັນນໍ້າ ຕາມດ່ານທີ່ກຳນົດ ໂດຍອີງການຄຸ້ມຄອງການປະມົງ. | |

## 7. ມາດຕະການຄຸ້ມຄອງການນຳເຂົ້າ ອາຫານສັດ: ມີ 08 ມາດຕະການ

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 1 | ການອອກໃບອະນຸຍາດນຳເຂົ້າ ອາຫານສັດ | ມາດຕາ 28:<br>ການນຳເຂົ້າອາຫານສັດເພື່ອຈຳໜ່າຍ ຕ້ອງປະຕິບັດດັ່ງນີ້:<br><br>4. ນຳເຂົ້າຕາມດ່ານທີ່ກຳນົດໄວ້ໃນໃບອະນຸຍາດນຳເຂົ້າ ແລະ ໄດ້ຮັບການກວດກາຄວາມຖືກຕ້ອງຈາກ ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ. | ດຳລັດ ວ່າດ້ວຍອາຫານສັດ ເລກທີ 02/ລບ, ລົງວັນທີ 02 ມັງກອນ 2020 |
| 2 | ການນຳເຂົ້າອາຫານສັດ ຕ້ອງຜ່ານດ່ານທີ່ກຳນົດໄວ້ | | |
| 3 | ອາຫານສັດນຳເຂົ້າ ຕ້ອງໄດ້ຮັບການກວດກາ | | |
| 4 | ກຳນົດໃຫ້ຜູ້ນຳເຂົ້າຕ້ອງຂຶ້ນທະບຽນຜູ້ນຳເຂົ້າ ອາຫານສັດ | ມາດຕາ 33:<br><br>ຜູ້ທີ່ມີຈຸດປະສົງດຳເນີນທຸລະກິດ ກ່ຽວກັບອາຫານສັດ ຕ້ອງຍື່ນຄຳຮ້ອງພ້ອມເອກະສານຄົບຊຸດ ຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍວິສາຫະກິດ, ພາຍຫຼັງທີ່ໄດ້ໃບທະບຽນວິສາຫະກິດ ແລ້ວຕ້ອງຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບອາຫານສັດ ນຳຂະແໜງການກະສິກຳ ແລະ ປ່າໄມ້. | |
| 5 | ກຳນົດໃຫ້ອາຫານສັດນຳເຂົ້າ ຕ້ອງໄດ້ຮັບການຈົດທະບຽນ | ວັກ 2, ມາດຕາ 11:<br><br>ຜູ້ດຳເນີນທຸລະກິດກ່ຽວກັບອາຫານສັດແລ້ວ ກ່ອນຈະມີການຜະລິດ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ແລະ ຈຳໜ່າຍ ຕ້ອງຂໍຂຶ້ນທະບຽນອາຫານສັດ ຕາມດຳລັດສະບັບນີ້. | |

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 6 | ອາຫານສັດນຳເຂົ້າ ຕ້ອງໄດ້ຮັບການຫຸ້ມຫໍ່ | ມາດຕາ 23:<br>ອາຫານສັດ, ສ່ວນປະກອບຂອງອາຫານສັດ ຕ້ອງບັນຈຸໄວ້ໃນພາຊະນະທີ່ຮັບປະກັນ, ໃໝ່, ສະອາດ, ປອດໄພ ແລະ ມີສະຫຼາກເປັນພາສາລາວ ແລະ ພາສາຕ່າງປະເທດ ທີ່ຊັດເຈນ ໂດຍຕ້ອງມີຂໍ້ມູນດັ່ງນີ້: 1) ຊື່ອາຫານສັດທາງການຄ້າ; 2) ເຄື່ອງໝາຍການຄ້າ; 3) ເລກທະບຽນອາຫານສັດ; 4) ຊື່ ແລະ ທີ່ຢູ່ ຂອງໂຮງງານຜະລິດ; 5) ນ້ຳໜັກຕາມລະບົບເມຕຣິກ; 6) ຊື່ວັດຖຸດິບທີ່ສຳຄັນທີ່ເປັນສ່ວນປະກອບຂອງອາຫານສັດ; 7) ຄຸນນະພາບທາງເຄມີ ຫຼື ໂພຊະນາການຕາມທີ່ຂຶ້ນທະບຽນໄວ້; 8) ວັນເດືອນປີ ຜະລິດ ແລະ ໝົດອາຍຸ; 9) ວິທີການນຳໃຊ້. | ດຳລັດ ວ່າດ້ວຍອາຫານສັດ ເລກທີ 02/ລບ, ລົງວັນທີ 02 ມັງກອນ 2020 |
| 7 | ອາຫານສັດນຳເຂົ້າຕ້ອງໄດ້ຮັບການຕິດສະຫຼາກ | | |
| 8 | ອາຫານສັດນຳເຂົ້າ ຕ້ອງໄດ້ຮັບການເກັບຮັກສາ | ມາດຕາ 24:<br>ເກັບຮັກສາ ແລະ ຂົນສົ່ງອາຫານສັດ ຕ້ອງປະຕິບັດ ດັ່ງນີ້:<br>1) ເກັບຮັກສາອາຫານສັດ ໄວ້ໃນສະຖານທີ່ ສະອາດ, ເໝາະສົມ ແລະ ປອດໄພ; 2) ການເກັບຮັກສາ ແລະ ການຂົນສົ່ງອາຫານສັດສຳເລັດຮູບ, ສ່ວນປະກອບຂອງອາຫານສັດ ແລະ ສານເພີ່ມໃສ່ອາຫານສັດ ຕ້ອງໃຫ້ແຍກກັນຕ່າງຫາກ ແລະ ບໍ່ໃຫ້ເກັບ ຫຼື ຂົນສົ່ງປົນກັບຈຳພວກຝຸ່ນ, ຢາປາບສັດຕູພືດ ແລະ ສານເຄມີອື່ນ;<br>3) ການເກັບສະສົມອາຫານສັດເພື່ອລ້ຽງສັດ ຕ້ອງສະສົມໄວ້ເທົ່າທີ່ມີຄວາມຈຳເປັນສຳລັບການນຳໃຊ້ ເພື່ອປ້ອງກັນບໍ່ໃຫ້ອາຫານສັດເສື່ອມຄຸນນະພາບ. | |

8. <u>ມາດຕະການຄຸ້ມຄອງການນຳເຂົ້າ ອາຫານ ແລະ ນ້ຳດື່ມ</u>: ມີ 06 ມາດຕະການ

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 1 | ການຈົດທະບຽນອາຫານ ແລະ ຜະລິດຕະພັນອາຫານນຳເຂົ້າ | <u>ວັກ 3, ມາດຕາ 13</u>:<br>ອາຫານທີ່ມີຄວາມສ່ຽງສູງ ຈະຕ້ອງໄດ້<u>ຈົດທະບຽນກ່ອນການອະນຸຍາດນຳເຂົ້າ</u>, ອາຫານຄວາມສ່ຽງກາງ ແລະ ຕ່ຳ ແມ່ນສາມາດຂໍອະນຸຍາດນຳເຂົ້າໄດ້ເລີຍ (ເອກະສານຊ້ອນທ້າຍລາຍການອາຫານຕາມຄວາມສ່ຽງ). | ຂໍ້ຕົກລົງ ວ່າດ້ວຍການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານ ເລກທີ 1166/ສທ, ລົງວັນທີ 21 ມິຖຸນາ 2018 |
| 2 | ຕ້ອງມີໃບຢັ້ງຢືນຄຸນນະພາບ ແລະ/ຫຼື ຄວາມປອດໄພດ້ານອາຫານນຳເຂົ້າ ຈາກປະເທດຕົ້ນທາງ | <u>ມາດຕາ 14</u>:<br>ເອກະສານທີ່ຕ້ອງປະກອບ ເພື່ອຂໍອະນຸຍາດນຳເຂົ້າມີດັ່ງນີ້:<br>4. <u>ໃບຢັ້ງຢືນຮັບຮອງຄວາມປອດໄພອາຫານໃດໜຶ່ງຈາກປະເທດສົ່ງອອກ</u> ເຊັ່ນ: Free sale Certificate, ໃບຢັ້ງຢືນ GHP, GMP, HACCP, ISO 22000 ຫຼື ການຢັ້ງຢືນອື່ນໆ ຈາກອົງການຄຸ້ມຄອງຄວາມປອດໄພອາຫານຂອງປະເທດສົ່ງອອກ ຢ່າງໜ້ອຍຍັງມີອາຍຸການນຳໃຊ້ໄດ້ 03 ເດືອນ (ເປັນພາສາອັງກິດ ແລະ ສະບັບແທ້, ຖ້າສະບັບສຳເນົາໃຫ້ຈ້ຳກາຂອງບໍລິສັດນຳເຂົ້າ) (1 ສະບັບ)<br>5. <u>ໃບຢັ້ງຢືນການວິໄຈຈາກອົງການຄຸ້ມຄອງຄວາມປອດໄພອາຫານຂອງປະເທດສົ່ງອອກ</u> ຫຼື ຫ້ອງວິໄຈທີ່ໄດ້ຮັບຮອງຢ່າງເປັນທາງການ ຢ່າງໜ້ອຍຍັງມີອາຍຸການນຳໃຊ້ໄດ້ສຳລັບຊຸດຜະລິດນັ້ນ (ເປັນພາສາອັງກິດ ແລະ ສະບັບແທ້, ຖ້າສະບັບສຳເນົາໃຫ້ຈ້ຳກາຂອງບໍລິສັດນຳເຂົ້າ) (2 ສະບັບ). | |

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 3 | ການອອກໃບອະນຸຍາດນຳເຂົ້າອາຫານ ແລະ ຜະລິດຕະພັນອາຫານ | ມາດຕາ 15:<br>ຜູ້ນຳເຂົ້າອາຫານ ຕ້ອງຍື່ນເອກະສານຕາມແບບຟອມທີ່ໄດ້ກຳນົດໄວ້ ຢ່າງໜ້ອຍ 05 ວັນລັດຖະການ ກ່ອນວັນທີຈະນຳເຂົ້າ ຢູ່ກົມອາຫານ ແລະ ຢາ ຫຼື ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນຫຼວງ ທີ່ໄດ້ຮັບການມອບໝາຍ ເພື່ອພິຈາລະນາ ພ້ອມທັງເສຍຄ່າທຳນຽມ. | ຂໍ້ຕົກລົງ ວ່າດ້ວຍການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານ ເລກທີ 1166/ສທ, ລົງວັນທີ 21 ມິຖຸນາ 2018 – (ຕໍ່) |
| 4 | ການກວດກາອາຫານ ແລະ ຜະລິດຕະພັນອາຫານ ນຳເຂົ້າ | ມາດຕາ 25:<br>ເມື່ອອາຫານເຂົ້າມາເຖິງດ່ານ, ເຈົ້າໜ້າທີ່ກວດກາອາຫານ ແລະ ຢາປະຈຳດ່ານ ຕ້ອງໄດ້ກວດກາອາຫານສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານ ຢູ່ດ່ານກວດກາທີ່ໄດ້ກຳນົດໄວ້ ຕາມຂັ້ນຕອນໃນຄູ່ມືແນະນຳການກວດກາ ແລະ ຕ້ອງໄດ້ປະສານສົມທົບກັບ ເຈົ້າໜ້າທີ່ພາສີ....., ຖ້າມີຄວາມຈຳເປັນ. | |
| 5 | ອາຫານ ແລະ ຜະລິດຕະພັນອາຫານນຳເຂົ້າ ຕ້ອງຜ່ານດ່ານທີ່ກຳນົດໄວ້ | ວັກ 3, ມາດຕາ 25:<br>ອາຫານ ຕ້ອງສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານ ຕາມດ່ານສາກົນ ຫຼື ດ່ານປະເພນີ ຕາມທີ່ໄດ້ກຳນົດຈາກກະຊວງສາທາລະນະສຸກ (ເອກະສານຊ້ອນທ້າຍທີ 4).<br>ດ່ານກວດກາການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານ ຕ້ອງໄດ້ກຳນົດຂຶ້ນເປັນລາຍການ ໂດຍການປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ. | |

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 6 | ການຕິດສະຫຼາກອາຫານ ແລະ ຜະລິດຕະພັນອາຫານ ນຳເຂົ້າ | <u>ມາດຕາ 27:</u><br>ອາຫານທີ່ນຳເຂົ້າ <u>ຕ້ອງຕິດສະຫຼາກເປັນພາສາລາວ ຕາມເງື່ອນໄຂທີ່ກຳນົດໄວ້</u> ໃນຂໍ້ຕົກລົງວ່າດ້ວຍສະຫຼາກອາຫານ ສະບັບເລກທີ 519/ກຊສ, ລົງວັນທີ 18/3/2009. ສຳລັບອາຫານທີ່ຜູ້ນຳເຂົ້າ ມີຈຸດປະສົງຈະເອົາມາຕິດສະຫຼາກຢູ່ໃນ ສປປ ລາວ ແມ່ນຕ້ອງດຳເນີນການຕິດສະຫຼາກໃຫ້ສຳເລັດພາຍໃນໄລຍະເວລາທີ່ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ໄດ້ກຳນົດໄວ້ ຈະແມ່ນໃນກໍລະນີໃດໆກໍຕາມ. | ຂໍ້ຕົກລົງ ວ່າດ້ວຍການສົ່ງອອກ-ນຳເຂົ້າ ແລະ ສົ່ງຜ່ານອາຫານ ເລກທີ 1166/ສທ, ລົງວັນທີ 21 ມິຖຸນາ 2018 – (ຕໍ່) |

## 9. <u>ມາດຕະການຄຸ້ມຄອງການນຳເຂົ້າລວມ</u>

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 1 | ການນຳເຂົ້າສິນຄ້າ ເພື່ອມາຂາຍ, ຈຳໜ່າຍ ຕ້ອງມີຄຸນນະພາບ, ຄວາມປອດໄພ ແລະ ລາຄາສົມເຫດສົມຜົນ | <u>ມາດຕາ 13</u>:<br>ການນຳເຂົ້າ, ການຂາຍ, ການຈຳໜ່າຍສິນຄ້າ ແລະ ການບໍລິການ <u>ຕ້ອງປະຕິບັດຕາມເງື່ອນໄຂ, ມາດຕະຖານ ແລະຜ່ານການກວດກາຂອງຂະແໜງການທີ່ກ່ຽວຂ້ອງ ກຳນົດໄວ້</u> ຢ່າງເຂັ້ມງວດ ເພື່ອຮັບປະກັນຄຸນນະພາບ, ຄວາມປອດໄພ, ຄວາມສະດວກວ່ອງໄວ, ລາຄາສົມເຫດສົມຜົນ ແລະ ບໍ່ເອົາລັດເອົາປຽບຜູ້ຊົມໃຊ້. | ກົດໝາຍ ວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010 |

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 2 | ການນຳເຂົ້າສິນຄ້າ ເພື່ອມາຂາຍ, ຈຳໜ່າຍ ຕ້ອງຕິດສະຫຼາກເປັນພາສາລາວ | <u>ຂໍ້ 1</u>:<br>ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ສົມທົບກັບຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ ພາຍໃນແຂວງ, ນະຄອນຫຼວງ ຂອງຕົນລົງເຜີຍແຜ່ ແລະ ແນະນຳໃຫ້ຜູ້ຜະລິດ, ຜູ້ນຳເຂົ້າ, ຜູ້ຂາຍຍົກ ແລະ ຂາຍຍ່ອຍ ສິນຄ້າ ໃຫ້ຕິດສະຫຼາກສິນຄ້າເປັນພາສາລາວ ຄືດັ່ງນີ້:<br>1. ຜູ້ຜະລິດ, ຜູ້ປະກອບ, ປຸງແຕ່ງ, ຫຸ້ມຫໍ່ ສິນຄ້າ ຢູ່ ສປປ ລາວ, ຜູ້ນຳເຂົ້າ ແລະ ຈຳໜ່າຍສິນຄ້າທີ່ຂຶ້ນທະບຽນວິສາຫະກິດ ການຄ້າຂາຍຍົກ ຫຼື ເປັນຕົວແທນຈຳໜ່າຍສິນຄ້າໃດໜຶ່ງ <u>ຕ້ອງຕິດສະຫຼາກສິນຄ້າເປັນພາສາລາວກ່ອນ ຈຶ່ງຈຳໜ່າຍໃຫ້ຜູ້ຊົມໃຊ້ ຫຼື ສະໜອງໃຫ້ຜູ້ຂາຍຍ່ອຍ</u>....<br>2. ຜູ້ດຳເນີນທຸລະກິດການຄ້າຂາຍຍ່ອຍ: ການຮັບເອົາສິນຄ້າມາຈຳໜ່າຍ ໃຫ້ຮັບເອົາສິນຄ້າທີ່ຕິດສະຫຼາກທີ່ເປັນພາສາລາວເທົ່ານັ້ນ. ພ້ອມນີ້, ກໍ່ຕ້ອງວາງຂາຍສິນຄ້າ ທີ່ໄດ້ຕິດສະຫຼາກເປັນພາສາລາວ...<br>3. ສຳລັບສິນຄ້າທີ່ໄດ້ຜະລິດ ຫຼື ນຳເຂົ້າມາຈຳໜ່າຍ ກ່ອນປະກາດໃຊ້ຄຳສັ່ງສະບັບນີ້ ຜູ້ຂາຍຍ່ອຍຕ້ອງປະສານເອົາສະຫຼາກທີ່ເປັນພາສາລາວ ນຳຜູ້ທີ່ສະໜອງສິນຄ້າໃຫ້ຕົນ ... | ຄຳສັ່ງ ກ່ຽວກັບການຕິດສະຫຼາກສິນຄ້າ ເປັນພາສາລາວ ເລກທີ 2501/ອຄ.ຄພນ, ລົງວັນທີ 16 ທັນວາ 2015 |

## 10. ລະບຽບການທາງພາສີ ກ່ຽວກັບມູນຄ່າແຈ້ງພາສີ ແລະ ການກວດປ່ອຍສິນຄ້ານຳເຂົ້າ ຢູ່ດ່ານ

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 1 | ມູນຄ່າແຈ້ງພາສີ | ມາດຕາ 16:<br>ມູນຄ່າແຈ້ງພາສີນຳເຂົ້າ (Customs Valuation for Import) ແມ່ນມູນຄ່າຕົວຈິງຂອງສິນຄ້າ, ເຄື່ອງຂອງ ລວມທັງຄ່າຂົນສົ່ງ ແລະ/ຫຼື ຄ່າປະກັນໄພ ແລະ ຄ່າໃຊ້ຈ່າຍອື່ນທີ່ກ່ຽວຂ້ອງ (ຖ້າມີ) ທີ່ສົ່ງຮອດດ່ານພາສີຊາຍແດນບ່ອນນຳເຂົ້າ ຫຼື ສະຖານທີ່ບ່ອນສິນຄ້າມາເຖິງ ໂດຍສອດຄ່ອງກັບມາດຕາ 7 ຂອງຂໍ້ຕົກລົງທົ່ວໄປວ່າດ້ວຍອັດຕາພາສີ ແລະ ການຄ້າ (GATT) ຂອງອົງການການຄ້າໂລກ.<br>ລາຍລະອຽດກ່ຽວກັບຫຼັກການປະເມີນມູນຄ່າແຈ້ງພາສີນຳເຂົ້າ ໄດ້ກຳນົດຢູ່ໃນບົດແນະນຳ ແລະ ຄູ່ມື ຢ່າງລະອຽດ. | ກົດໝາຍ ວ່າດ້ວຍພາສີ (ສະບັບປັບປຸງ) ເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020; |
| 2 | ການກວດປ່ອຍສິນຄ້າ | ມາດຕາ 29:<br>ເຈົ້າໜ້າທີ່ພາສີ ມີໜ້າທີ່ກວດກາເອກະສານແຈ້ງພາສີ ຕາມແບບພິມການແຈ້ງພາສີເປັນລາຍລະອຽດກັບເອກະສານອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ກວດກາຄວາມສອດຄ່ອງກັບນະໂຍບາຍຄຸ້ມຄອງສິນຄ້າ ແລະ ອັດຕາພາສີຕາມກົດໝາຍ. ຖ້າເຈົ້າໜ້າທີ່ພາສີ ຫາກເຫັນວ່າຂໍ້ມູນດັ່ງກ່າວຖືກຕ້ອງ ກໍໃຫ້ຮັບ ແລະ ລົງທະບຽນການແຈ້ງພາສີເປັນລາຍລະອຽດ. ໃນກໍລະນີເຈົ້າໜ້າທີ່ພາສີ ຫາກກວດພົບເຫັນຂໍ້ມູນແຈ້ງພາສີ ບໍ່ຖືກຕ້ອງ, ຄົບຖ້ວນ ຕ້ອງແຈ້ງໃຫ້ຜູ້ແຈ້ງພາສີຮັບຊາບ ໃນທັນທີ. | |

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 3 | ການຢຸດຕິການນຳໃຊ້ລະບອບການນຳເຂົ້າຍ່ອຍ SD4, ລະຫັດເຄົ້າ 2 ຕົວເລກ 44 ຢູ່ດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ. | ຂໍ້ 1:<br>ໃຫ້ຢຸດຕິການນຳໃຊ້ລະບອບການນຳເຂົ້າ ຍ່ອຍ SD4, ລະຫັດເຄົ້າ 2 ຕົວເລກ 44 ຢູ່ດ່ານພາສີຊາຍແດນ (ດ່ານພາສີສາກົນ, ດ່ານພາສີທ້ອງຖິ່ນ ແລະ ດ່ານພາສີປະເພນີ) ໃນຂອບເຂດທົ່ວປະເທດ.<br>ຂໍ້ 2:<br>ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄີຍແຈ້ງພາສີ ໃນລະບອບການນຳເຂົ້າຍ່ອຍ SD4, ລະຫັດເຄົ້າ 2 ຕົວເລກ 44 ໃຫ້ຫັນມາແຈ້ງພາສີດ້ວຍລະບອບ 40 (IM4) ເປັນນິຕິບຸກຄົນ ຊຶ່ງຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:<br>- ມີທະບຽນວິສາຫະກິດ;<br>- ມີເລກລະຫັດປະຈຳຕົວຜູ້ເສຍອາກອນ (TIN);<br>- ມີໃບຢັ້ງຢືນການມອບອາກອນປະຈຳປີ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;<br>- ຖືບັນຊີວິສາຫະກິດຖືກຕ້ອງ ຕາມກົດໝາຍ ວ່າດ້ວຍບັນຊີ ແລະ ເຂົ້າໃນອາກອນມູນຄ່າເພີ່ມ;<br>- ມີລະບົບສາງເກັບມ້ຽນສິນຄ້າທີ່ໄດ້ມາດຕະຖານ ແລະ ມີການສະຫຼຸບຈຳນວນສິນຄ້າເຂົ້າ-ອອກສາງ;<br>- ໄດ້ຮັບການຝຶກອົບຮົມເປັນຜູ້ບໍລິການແຈ້ງພາສີ ຫຼື ຜູ້ແຈ້ງພາສີທົ່ວໄປ ແລະ ຕ້ອງມີບັດອະນຸຍາດແຈ້ງພາສີ (User ID) ທີ່ອອກໃຫ້ໂດຍລັດຖະການພາສີ. | ແຈ້ງການ ກ່ຽວກັບຢຸດຕິການນຳໃຊ້ລະບອບການນຳເຂົ້າຍ່ອຍ SD4, ລະຫັດເຄົ້າ 2 ຕົວເລກຢູ່ດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ ເລກທີ 4572/ກງ, ລົງວັນທີ 17 ກັນຍາ 2021 |

| ລ/ດ | ຊື່ມາດຕະການ | ລາຍລະອຽດ | ນິຕິກຳ |
|---|---|---|---|
| 4 | ການອອກໜັງສືຢັ້ງຢືນສິດພິເສດດ້ານອັດຕາພາສີ ສໍາລັບການນໍາເຂົ້າສິນຄ້າທຸກປະເພດ | ຂໍ້ 3:<br>ເພື່ອຮັບປະກັນຄວາມເປັນເອກະສານ ແລະ ມອບຖືກຕ້ອງໃນການປະຕິບັດກົດໝາຍ ແລະ ລະບຽບການ, ການຄຸ້ມຄອງ, ກວດກາ ແມ່ນລວມສູນ ຢູ່ກົມພາສີ ແລະ ມອບໝາຍຄວາມຮັບຜິດຊອບ ດັ່ງນີ້:<br>3.1ພະແນກລະບຽບການ ແລະ ຂັ້ນຕອນການແຈ້ງພາສີ ເປັນເສນາທິການໃຫ້ກົມພາສີ ໃນການຄົ້ນຄວ້າ, ຄຸ້ມຄອງກວດກາ ແລະ ອອກໜັງສືຢັ້ງຢືນສິດພິເສດດ້ານອັດຕາພາສີ ສໍາລັບການນໍາເຂົ້າສິນຄ້າທຸກປະເພດ ຍົກເວັ້ນບາງປະເພດສິນຄ້າ ທີ່ກົມພາສີ ມີແຈ້ງການແນະນໍາໃຫ້ດ່ານພາສີຊາຍແດນເປັນຜູ້ຄຸ້ມຄອງກວດກາເປັນອັນສະເພາະ.<br>3.2ດ່ານພາສີຊາຍແດນບ່ອນນໍາເຂົ້າສິນຄ້າ ຕ້ອງເປັນເຈົ້າການຄຸ້ມຄອງ, ກວດກາ ໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ (ຕົ້ນສະບັບ), ກວດກາໜັງສືຢັ້ງຢືນສິດທິພິເສດດ້ານອັດຕາພາສີ ໃສ່ສິນຄ້າຕົວຈິງ (ສໍາລັບສິນຄ້າທີ່ພະແນກລະບຽບການ ແລະ ຂັ້ນຕອນການແຈ້ງພາສີ ອອກໜັງສືຢັ້ງຢືນ) ເພື່ອໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ. | ຄໍາແນະນໍາ ກ່ຽວກັບແຫຼ່ງກໍາເນີດສິນຄ້າ ແລະ ການໃຫ້ສິດທິພິເສດດ້ານອັດຕາພາສີ ຕາມເງື່ອນໄຂຂອງບັນດາສັນຍາການຄ້າເສລີຕ່າງໆ ທີ່ ສປປ ລາວ ເຂົ້າເປັນພາຄີ ເລກທີ 3782/ກພສ, ລົງວັນທີ 16 ກຸມພາ 2016 |

## ເອກະສານຊ້ອນທ້າຍ 02: ຂັ້ນຕອນ ແລະ ເອກະສານປະກອບສຳລັບການອອກອະນຸຍາດ, ຢັ້ງຢືນ ນຳເຂົ້າສິນຄ້າ

### 1. <u>ຂັ້ນຕອນການອອກໃບອະນຸຍາດນຳເຂົ້າ ເຂົ້າກິນ</u>

ການອອກອະນຸຍາດນຳເຂົ້າ ເຂົ້າກິນ ແມ່ນຕິດພັນກັບ 02 ຂະແໜງການຄື: ຂະແໜງອຸດສາຫະກຳ ແລະ ການຄ້າ (ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ) ແລະ ຂະແໜງກະສິກຳ ແລະ ປ່າໄມ້ (ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ).

1) **<u>ຂະແໜງອຸດສາຫະກຳ ແລະ ການຄ້າ</u>:** ການນຳເຂົ້າ ເຂົ້າກິນ ຕ້ອງໄດ້ຂໍໃບອະນຸຍາດນຳເຂົ້າ ນຳ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ. ສຳລັບຂັ້ນຕອນ ແລະ ເອກະສານປະກອບສຳລັບການອອກໃບອະນຸຍາດນຳເຂົ້າ ເຂົ້າກິນ ປະກອບມີດັ່ງນີ້:



**ຂັ້ນຕອນທີ 1: ຍື່ນເອກະສານ**

ເອກະສານປະກອບ ເພື່ອຂໍອະນຸຍາດນໍາເຂົ້າ ເຂົ້າກິນ ມີດັ່ງນີ້:

1) ໃບຄໍາຮ້ອງຂໍອະນຸຍາດນໍາເຂົ້າ ເຂົ້າ;
2) ສໍາເນົາຂອງເອກະສານຕາມແຕ່ລະກໍລະນີ;
3) ໃບທະບຽນວິສາຫະກິດ ຫຼື ໃບທະບຽນສໍາປະທານທີ່ຖືກຕ້ອງ ຕາມລະບຽບກົດໝາຍ (ສໍາລັບວິສາຫະກິດທີ່ຢູ່ ສປປ ລາວ); ຫຼື
4) ໃບທະບຽນວິສາຫະກິດ ອອກໃຫ້ໂດຍທາງການຂອງປະເທດກ່ຽວຂ້ອງ ທີ່ຖືກຕ້ອງຕາມລະບຽບກົດໝາຍ (ສໍາລັບວິສາຫະກິດທີ່ບໍ່ຢູ່ ສປປ ລາວ). ແຕ່ຕ້ອງເຮັດສັນຍາຊື້-ຂາຍເຂົ້າ ກັບບໍລິສັດທີ່ໄດ້ຮັບອະນຸຍາດດໍາເນີນທຸລະກິດຊື້-ຂາຍເຂົ້າຢູ່ ສປປ ລາວ.

ໃນກໍລະນີເອກະສານທີ່ເປັນພາສາຕ່າງປະເທດ ຕ້ອງໄດ້ແປເປັນພາສາລາວ ໂດຍມີການຢັ້ງຢືນຈາກສໍານັກງານທະບຽນສານຂອງ ສປປ ລາວ.

**ຂັ້ນຕອນທີ 2: ພິຈາລະນາເອກະສານ**

ຖ້າເອະສານບໍ່ຖືກຕ້ອງ, ໃຫ້ແຈ້ງຜູ້ຍື່ນຄໍາຮ້ອງ ຮັບຊາບ ເພື່ອນໍາໄປປັບປຸງຄືນໃໝ່. ຖ້າເອກະສານຄົບຖ້ວນ ແລະ ຖືກຕ້ອງຕາມເງື່ອນໄຂ ແມ່ນຈະຮັບມາພິຈາລະນາ ຕາມຂັ້ນຕອນ.

**ຂັ້ນຕອນທີ 3: ເຊັນ ແລະ ອອກໃບອະນຸຍາດ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ແມ່ນຈະອອກໃບອະນຸຍາດນໍາເຂົ້າໃຫ້ແກ່ຜູ້ຍື່ນຄໍາຮ້ອງ.

**ຂັ້ນຕອນທີ 4: ຮັບໃບອະນຸຍາດ**

ເຈົ້າໜ້າທີ່ຮັບຜິດຊອບ ຈະແຈ້ງໃຫ້ຜູ້ຍື່ນຄໍາຮ້ອງ ມາຮັບເອົາໃບອະນຸຍາດນໍາເຂົ້າ ເຂົ້າກິນ.

2) **ຂະແໜງກະສິກຳ ແລະ ປ່າໄມ້:** ເຂົ້າກິນ ແມ່ນນອນໃນບັນຊີພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ຕ້ອງຂໍອະນຸຍາດນຳເຂົ້າ ສປປ ລາວ ໂດຍການວິໄຈຄວາມສ່ຽງສັດຕູພືດ ນຳກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ຊຶ່ງຂັ້ນຕອນ ແລະ ເອກະສານປະກອບ ສຳລັບການອອກອະນຸຍາດນຳເຂົ້າ ເຂົ້າກິນ ປະກອບມີດັ່ງນີ້:



**ຂັ້ນຕອນ 1: ຍື່ນເອກະສານ**

1) ໃບຄຳຮ້ອງ (ມີແບບຟອມ);
2) ໃບທະບຽນວິສາຫະກິດ (ສະເພາະນຳເຂົ້າມາຈຳໜ່າຍ ຫຼື ການລົງທຶນ);
3) ໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້ (ສະເພາະການນຳເຂົ້າຮັບໃຊ້ໃຫ້ແກ່ການດຳເນີນທຸລະກິດ);
4) ແຜນການນຳເຂົ້າ ແລະ ນຳໃຊ້ພາຍໃນປະເທດ (ໃນກໍລະນີນຳເຂົ້າຫຼາຍຄັ້ງຕໍ່ປີ);
5) ແຜນການຄົ້ນຄວ້າທົດລອງ (ສະເພາະການນຳເຂົ້າມາຄົ້ນຄວ້າ);
6) ໃບມອບສິດ (ໃນກໍລະນີໃຫ້ຜູ້ອື່ນ ດຳເນີນການແທນ);
7) ໃບແຈ້ງລາຄາ (ສະເພາະຄັ້ງດຽວ);
8) ໃບແຈ້ງລາຍການຫຸ້ມຫໍ່ (ສະເພາະຄັ້ງດຽວ);
9) ສັນຍາຈັດຕັ້ງປະຕິບັດຂໍ້ກຳນົດເງື່ອນໄຂໃນການນຳເຂົ້າ (ຖ້າມີ).

**ຂັ້ນຕອນ 2 ພິຈາລະນາເອກະສານ**

ພະນັກງານຂອງກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ຈະດຳເນີນກວດກາເອກະສານກັບທີ່. ຖ້າເອກະສານຄົບຖ້ວນ ແລະ ຖືກຕ້ອງຕາມຂັ້ນຕອນ 1 ແມ່ນຈະຮັບເອົາເພື່ອດຳເນີນຕາມຂັ້ນຕອນ. ແຕ່ຖ້າບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ແມ່ນຈະສົ່ງຄືນເອກະສານໃຫ້ຜູ້ຍື່ນຄຳຮ້ອງ ພ້ອມແນະນຳໃຫ້ປະກອບເອກະສານໃໝ່.

**ຂັ້ນຕອນ 3 ເຊັນ ແລະ ອອກໃບອະນຸຍາດ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ, ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ຈະໃຊ້ເວລາພິຈາລະນາອອກອະນຸຍາດນຳເຂົ້າ ເຂົ້າກົນ ພາຍໃນ 15 ວັນລັດຖະການ ຊຶ່ງໃບອະນຸຍາດນຳເຂົ້າ ສາມາດໃຊ້ໄດ້ພຽງຄັ້ງດຽວເທົ່ານັ້ນ.

**ຂັ້ນຕອນ 4 ຮັບໃບອະນຸຍາດ**

ຜູ້ຍື່ນຄຳຮ້ອງ ສາມາດໄປຮັບເອົາໃບອະນຸຍາດນຳເຂົ້າໄດ້ທີ່ ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ຕາມວັນ ແລະ ເວລາທີ່ກຳນົດ.

❖ ໃນເວລາສິນຄ້າຮອດດ່ານຕົວຈິງ, ໃຫ້ປະກອບເອກະສານເພີ່ມເຕີມ ດັ່ງນີ້:

1) ໃບອະນຸຍາດນຳເຂົ້າ ອອກໃຫ້ໂດຍກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ;
2) ໃບຢັ້ງຢືນສຸຂານາໄມພືດ ຫຼື ໃບຢັ້ງຢືນສຸຂານາໄມພືດສຳລັບສົ່ງອອກຕໍ່ ຂອງປະເທດສົ່ງອອກ;
3) ໃບແຈ້ງລາຍການສິນຄ້າ ແລະ ໃບແຈ້ງລາຄາ;
4) ໃບຢັ້ງຢືນການບຳບັດສິນຄ້າ;
5) ໃບຢັ້ງຢືນ ຫຼື ບົດລາຍງານ ກ່ຽວກັບຜົນການກວດກາພາກສະໜາມ;
6) ບົດບັນທຶກຂໍ້ມູນສະຖານທີ່ປະກອບການຜະລິດ;
7) ເອກະສານຢັ້ງຢືນແຫຼ່ງກຳເນີດ;
8) ເອກະສານອື່ນໆທີ່ກ່ຽວຂ້ອງ ຕາມການກຳນົດຂອງກົມປູກຝັງ ໃນແຕ່ລະໄລຍະ.

ໃນການກວດກາໃບຢັ້ງຢືນສຸຂານາໄມພືດນັ້ນ, ເຈົ້າໜ້າທີ່ກັກກັນພືດ ຕ້ອງກວດກາຄວາມຖືກຕ້ອງ ຂອງໃບຢັ້ງຢືນສຸຂານາໄມພືດ ຊຶ່ງປະກອບມີດັ່ງນີ້:

1) ໃບຢັ້ງຢືນສຸຂານາໄມພືດ ຖືກຕ້ອງຕາມແບບພິມທີ່ຖືກຮັບຮອງຈາກ ມາດຕະຖານສາກົນດ້ານມາດຕະການສຸຂານາໄມພືດ;
2) ອາຍຸໃບຢັ້ງຢືນສຸຂານາໄມພືດ ຕ້ອງບໍ່ເກີນ ສິບສີ່ ວັນ ນັບແຕ່ວັນອອກໃບຢັ້ງຢືນສຸຂານາໄມພືດ ແລະ ຂົນສົ່ງຊຸດສິນຄ້າ ອອກຈາກປະເທດສົ່ງອອກ;
3) ເປັນພາສາອັງກິດ;
4) ປະກອບຂໍ້ມູນຄົບຖ້ວນ, ຊື່ວິທະຍາສາດ ແລະ ຊື່ສາມັນ ຂອງຊຸດສິນຄ້າ;
5) ວັນທີ, ເດືອນ, ປີ ອອກໃບຢັ້ງຢືນສຸຂານາໄມພືດ;
6) ອອກໃຫ້ໂດຍ ແລະ ໃຊ້ຕາປະທັບ ຂອງອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດສົ່ງອອກ;
7) ມີການແຈ້ງຂໍ້ມູນເພີ່ມຕື່ມ (additional declarations) ຕາມທີ່ໄດ້ກຳນົດໄວ້ໃນໃບອະນຸຍາດນຳເຂົ້າ.

## 2. ຂັ້ນຕອນການອອກໃບອະນຸຍາດນຳເຂົ້າ ພືດ-ຜັກ ແລະ ໝາກໄມ້

ພືດ-ຜັກ ແລະ ໝາກໄມ້ ເຂົ້າກິນ ແມ່ນນອນໃນບັນຊີພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ຕ້ອງຂໍອະນຸຍາດນຳເຂົ້າ ສປປ ລາວ ໂດຍການວິໄຈຄວາມສ່ຽງສັດຕູພືດ ນຳກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ຊຶ່ງຂັ້ນຕອນ ແລະ ເອກະສານປະກອບ ສຳລັບການອອກອະນຸຍາດນຳເຂົ້າ ປະກອບມີດັ່ງນີ້:



**ຂັ້ນຕອນ 1: ຍື່ນເອກະສານ**

1) ໃບຄຳຮ້ອງ (ມີແບບຟອມ);
2) ໃບທະບຽນວິສາຫະກິດ (ສະເພາະນຳເຂົ້າມາຈຳໜ່າຍ ຫຼື ການລົງທຶນ);
3) ໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້ (ສະເພາະການນຳເຂົ້າຮັບໃຊ້ໃຫ້ແກ່ການດຳເນີນທຸລະກິດ);
4) ແຜນການນຳເຂົ້າ ແລະ ນຳໃຊ້ພາຍໃນປະເທດ (ໃນກໍລະນີນຳເຂົ້າຫຼາຍຄັ້ງຕໍ່ປີ);
5) ແຜນການຄົ້ນຄວ້າທົດລອງ (ສະເພາະການນຳເຂົ້າມາຄົ້ນຄວ້າ);
6) ໃບມອບສິດ (ໃນກໍລະນີໃຫ້ຜູ້ອື່ນ ດຳເນີນການແທນ);
7) ໃບແຈ້ງລາຄາ (ສະເພາະຄັ້ງດຽວ);
8) ໃບແຈ້ງລາຍການຫຸ້ມຫໍ່ (ສະເພາະຄັ້ງດຽວ);
9) ສັນຍາຈັດຕັ້ງປະຕິບັດຂໍ້ກຳນົດເງື່ອນໄຂໃນການນຳເຂົ້າ (ຖ້າມີ).

**ຂັ້ນຕອນ 2 ພິຈາລະນາເອກະສານ**

ພະນັກງານຂອງກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ຈະດຳເນີນກວດກາເອກະສານກັບທີ່. ຖ້າເອກະສານຄົບຖ້ວນ ແລະ ຖືກຕ້ອງຕາມຂັ້ນຕອນ 1 ແມ່ນຈະຮັບເອົາເພື່ອດຳເນີນຕາມຂັ້ນຕອນ. ແຕ່ຖ້າບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ແມ່ນຈະສົ່ງຄືນເອກະສານໃຫ້ຜູ້ຍື່ນຄຳຮ້ອງພ້ອມແນະນຳໃຫ້ປະກອບເອກະສານໃໝ່.

**ຂັ້ນຕອນ 3 ເຊັນ ແລະ ອອກໃບອະນຸຍາດ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ, ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ຈະໃຊ້ເວລາພິຈາລະນາອອກອະນຸຍາດນຳເຂົ້າ ພາຍໃນ 15 ວັນລັດຖະການ ຊຶ່ງໃບອະນຸຍາດນຳເຂົ້າ ສາມາດໃຊ້ໄດ້ພຽງຄັ້ງດຽວເທົ່ານັ້ນ.

**ຂັ້ນຕອນ 4 ຮັບໃບອະນຸຍາດ**

ຜູ້ຍື່ນຄຳຮ້ອງ ສາມາດໄປຮັບເອົາໃບອະນຸຍາດນຳເຂົ້າໄດ້ທີ່ ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຕາມວັນ ແລະ ເວລາທີ່ກຳນົດ.

❖ ໃນເວລາສິນຄ້າຮອດດ່ານຕົວຈິງ, ໃຫ້ປະກອບເອກະສານເພີ່ມເຕີມ ດັ່ງນີ້:

1) ໃບອະນຸຍາດນໍາເຂົ້າ ອອກໃຫ້ໂດຍກົມປູກຝັງ ຫຼື ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ;
2) ໃບຢັ້ງຢືນສຸຂານາໄມພືດ ຫຼື ໃບຢັ້ງຢືນສຸຂານາໄມພືດສໍາລັບສົ່ງອອກຕໍ່ ຂອງປະເທດສົ່ງອອກ;
3) ໃບແຈ້ງລາຍການສິນຄ້າ ແລະ ໃບແຈ້ງລາຄາ;
4) ໃບຢັ້ງຢືນການບໍາບັດສິນຄ້າ;
5) ໃບຢັ້ງຢືນ ຫຼື ບົດລາຍງານ ກ່ຽວກັບຜົນການກວດກາພາກສະໜາມ;
6) ບົດບັນທຶກຂໍ້ມູນສະຖານທີ່ປະກອບການຜະລິດ;
7) ເອກະສານຢັ້ງຢືນແຫຼ່ງກໍາເນີດ;
8) ເອກະສານອື່ນໆທີ່ກ່ຽວຂ້ອງ ຕາມການກໍານົດຂອງກົມປູກຝັງ ໃນແຕ່ລະໄລຍະ.

ໃນການກວດກາໃບຢັ້ງຢືນສຸຂານາໄມພືດນັ້ນ, ເຈົ້າໜ້າທີ່ກັກກັນພືດ ຕ້ອງກວດກາຄວາມຖືກຕ້ອງ ຂອງໃບຢັ້ງຢືນສຸຂານາໄມພືດ ຊຶ່ງປະກອບມີ ດັ່ງນີ້:

1) ໃບຢັ້ງຢືນສຸຂານາໄມພືດ ຖືກຕ້ອງຕາມແບບພິມທີ່ຖືກຮັບຮອງຈາກ ມາດຕະຖານສາກົນດ້ານ ມາດຕະການສຸຂານາໄມພືດ;
2) ອາຍຸໃບຢັ້ງຢືນສຸຂານາໄມພືດ ຕ້ອງບໍ່ເກີນ ສິບສີ່ ວັນ ນັບແຕ່ວັນອອກໃບຢັ້ງຢືນສຸຂານາໄມພືດ ແລະ ຂົນສົ່ງຊຸດສິນຄ້າ ອອກຈາກປະເທດສົ່ງອອກ;
3) ເປັນພາສາອັງກິດ;
4) ປະກອບຂໍ້ມູນຄົບຖ້ວນ, ຊື່ວິທະຍາສາດ ແລະ ຊື່ສາມັນ ຂອງຊຸດສິນຄ້າ;
5) ວັນທີ, ເດືອນ, ປີ ອອກໃບຢັ້ງຢືນສຸຂານາໄມພືດ;
6) ອອກໃຫ້ໂດຍ ແລະ ໃຊ້ຕາປະທັບ ຂອງອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດສົ່ງ ອອກ;
7) ມີການແຈ້ງຂໍ້ມູນເພີ່ມຕື່ມ (additional declarations) ຕາມທີ່ໄດ້ກໍານົດໄວ້ໃນໃບ ອະນຸຍາດນໍາເຂົ້າ.

### 3. ຂັ້ນຕອນການອອກໃບອະນຸຍາດນຳເຂົ້າ ຝຸ່ນ

ການນຳເຂົ້າຝຸ່ນ ຕ້ອງໄດ້ຮັບອະນຸຍາດນຳເຂົ້າ ຈາກພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ຊຶ່ງຂັ້ນຕອນ ແລະ ເອກະສານປະກອບສຳລັບການອອກອະນຸຍາດນຳເຂົ້າ ປະກອບມີດັ່ງນີ້:



**ຂັ້ນຕອນ 1: ຍື່ນເອກະສານ**

1) ໃບຄຳຮ້ອງ (ມີແບບຟອມ);
2) ໃບທະບຽນວິສາຫະກິດ (ສະເພາະນຳເຂົ້າມາຈຳໜ່າຍ ຫຼື ການລົງທຶນ);
3) ໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້ (ສະເພາະການນຳເຂົ້າຮັບໃຊ້ໃຫ້ແກ່ການດຳເນີນທຸລະກິດ);
4) ແຜນການນຳເຂົ້າ ແລະ ນຳໃຊ້ພາຍໃນປະເທດ (ໃນກໍລະນີນຳເຂົ້າຫຼາຍຄັ້ງຕໍ່ປີ);
5) ແຜນການຄົ້ນຄວ້າທົດລອງ (ສະເພາະການນຳເຂົ້າມາຄົ້ນຄວ້າ);
6) ໃບມອບສິດ (ໃນກໍລະນີໃຫ້ຜູ້ອື່ນ ດຳເນີນການແທນ);
7) ໃບແຈ້ງລາຄາ (ສະເພາະຄັ້ງດຽວ);
8) ໃບແຈ້ງລາຍການຫຸ້ມຫໍ່ (ສະເພາະຄັ້ງດຽວ);
9) ສັນຍາຈັດຕັ້ງປະຕິບັດຂໍ້ກຳນົດເງື່ອນໄຂໃນການນຳເຂົ້າ (ຖ້າມີ).

**ຂັ້ນຕອນ 2 ພິຈາລະນາເອກະສານ**

ພະນັກງານຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ຈະດຳເນີນກວດກາເອກະສານທັນທີ. ຖ້າເອກະສານຄົບຖ້ວນ ແລະ ຖືກຕ້ອງຕາມຂັ້ນຕອນ 1 ແມ່ນຈະຮັບເອົາ ເພື່ອດຳເນີນຕາມຂັ້ນຕອນ. ແຕ່ຖ້າບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ແມ່ນຈະສົ່ງຄືນເອກະສານໃຫ້ຜູ້ຍື່ນຄຳຮ້ອງ ພ້ອມແນະນຳໃຫ້ປະກອບເອກະສານໃໝ່.

**ຂັ້ນຕອນ 3 ເຊັນ ແລະ ອອກໃບອະນຸຍາດ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ຈະໃຊ້ເວລາພິຈາລະນາອອກອະນຸຍາດນຳເຂົ້າ ພາຍໃນ 15 ວັນລັດຖະການ ຊຶ່ງໃບອະນຸຍາດນຳເຂົ້າ ສາມາດໃຊ້ໄດ້ພຽງຄັ້ງດຽວເທົ່ານັ້ນ.

**ຂັ້ນຕອນ 4 ຮັບໃບອະນຸຍາດ**

ຜູ້ຍື່ນຄຳຮ້ອງ ສາມາດໄປຮັບເອົາໃບອະນຸຍາດນຳເຂົ້າໄດ້ທີ່ ພະແນກກະສິກຳ ແລະ ປ່າໄມ້ ຕາມວັນ ແລະເວລາທີ່ກຳນົດ.

4. <u>ຂັ້ນຕອນການຂຶ້ນທະບຽນ ຢາປາບສັດຕູພືດນໍາເຂົ້າ</u>

ຢາປາບສັດຕູພືດນໍາເຂົ້າ ຕ້ອງໄດ້ຮັບການຂຶ້ນທະບຽນຈາກກົມປູກຝັງ, ກະຊວງກະສິກໍາ ແລະ ປ່າໄມ້ ຊຶ່ງຂັ້ນຕອນ ແລະ ເອກະສານປະກອບ ສໍາລັບການຂຶ້ນທະບຽນ ປະກອບມີດັ່ງນີ້:



**ຂັ້ນຕອນ 1: ຍື່ນເອກະສານ**

1) ຄຳຮ້ອງ;
2) ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດຢາປາບສັດຕູພືດ;
3) ໃບຂຶ້ນທະບຽນວິຊາການຢາປາບສັດຕູພືດ ຈາກປະເທດຕົ້ນກຳເນີດ;
4) ໃບຢັ້ງຢືນຜົນການວິໄຈສ່ວນປະກອບຂອງຢາປາບສັດຕູພືດ ຈາກປະເທດຕົ້ນກຳເນີດ;
5) ບົດປະເມີນ ກ່ຽວກັບປະສິດທິພາບ, ຄຸນລັກສະນະ ແລະ ຄວາມປອດໄພຂອງຢາປາບສັດຕູພືດ;
6) ແຜນການທົດສອບ ກ່ຽວກັບຄຸນນະພາບ ແລະ ປະສິດທິພາບຢາປາບສັດຕູພືດພາກສະໜາມ;
7) ໃບມອບສິດຈາກຜູ້ຜະລິດຢາປາບສັດຕູພືດ ຂອງປະເທດສົ່ງອອກ;
8) ໃບມອບສິດ ແລະ ບັດປະຈຳຕົວ ຂອງຜູ້ຍື່ນເອກະສານ;
9) ເອກະສານອື່ນ ຕາມການກຳນົດຂອງກະຊວງກະສິກຳ ແລະ ປ່າໄມ້.

**ຂັ້ນຕອນ 2 ພິຈາລະນາເອກະສານ**

ພະນັກງານຂອງກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ຈະດຳເນີນກວດກາເອກະສານທັນທີ. ຖ້າເອກະສານຄົບຖ້ວນ ແລະ ຖືກຕ້ອງຕາມຂັ້ນຕອນ 1 ແມ່ນຈະຮັບເອົາ ເພື່ອດຳເນີນຕາມຂັ້ນຕອນ. ແຕ່ຖ້າບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ແມ່ນຈະສົ່ງຄືນເອກະສານໃຫ້ຜູ້ຍື່ນຄຳຮ້ອງ ພ້ອມແນະນຳໃຫ້ປະກອບເອກະສານໃໝ່.

**ຂັ້ນຕອນ 3 ເຊັນ ແລະ ອອກໃບຂຶ້ນທະບຽນວິຊາການຢາປາບສັດຕູພືດ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ, ກົມປູກຝັງ ຈະໃຊ້ເວລາພິຈາລະນາອອກໃບຂຶ້ນທະບຽນວິຊາການຢາປາບສັດຕູພືດ ພາຍໃນ 15 ວັນລັດຖະການ ຊຶ່ງມີອາຍຸການນຳໃຊ້ໜຶ່ງປີ ແລະ ສາມາດຕໍ່ໄດ້.

**ຂັ້ນຕອນ 4 ຮັບໃບຂຶ້ນທະບຽນວິຊາການຢາປາບສັດຕູພືດ**

ຜູ້ຍື່ນຄຳຮ້ອງ ສາມາດໄປຮັບເອົາໃບຂຶ້ນທະບຽນວິຊາການຢາປາບສັດຕູພືດໄດ້ທີ່ ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ຕາມວັນ ແລະ ເວລາທີ່ກຳນົດ.

## 5. ຂັ້ນຕອນການອອກໃບອະນຸຍາດນຳເຂົ້າ ສັດ ແລະ ຜະລິດຕະພັນສັດ (ໝູ ແລະ ສັດປີກ)

ການນຳເຂົ້າສັດ ແລະ ຜະລິດຕະພັນສັດ (ໝູ ແລະ ສັດປີ) ຕ້ອງໄດ້ອະນຸຍາດຈາກກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້ ຊຶ່ງຂັ້ນຕອນ ແລະ ເອກະສານປະກອບ ສຳລັບການອອກອະນຸຍາດນຳເຂົ້າ ປະກອບມີດັ່ງນີ້:




### ຂັ້ນຕອນ 1: ຍື່ນເອກະສານ

1) ໃບຄຳຮ້ອງ (ມີແບບຟອມ);
2) ສຳເນົາບັດປະຈຳຕົວປະຊາຊົນ ຫຼື ໜັງສືເດີນທາງ;
3) ສຳເນົາໃບທະບຽນວິສາຫະກິດ;
4) ໃບແຈ້ງລາຄາສິນຄ້າ ແລະ ໃບແຈ້ງລາຍການສິນຄ້າ;
5) ໃບມອບສິດ (ຖ້າໃຫ້ຜູ້ອື່ນມາແລ່ນເອກະສານແທນ);
6) ໃບຢັ້ງຢືນມາດຕະຖານດ້ານເຕັກນິກ ກ່ຽວກັບ ຟາມ / ໂຮງຂ້າສັດ / ສະຖານທີ່ເກັບຮັກສາ / ບ່ອນຈຳໜ່າຍ ຕາມແຕ່ລະກໍລະນີ (GAHP/GMP);
7) ບົດລາຍງານການກວດກາຕົວຈິງ ຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ ຂັ້ນເມືອງ ຫຼື ແຂວງ ໃນກໍລະນີທີ່ມີການຮຽກຮ້ອງ.

**ຂັ້ນຕອນ 2 ພິຈາລະນາເອກະສານ**

ກົມລ້ຽງສັດ ແລະ ການປະມົງ ຈະດຳເນີນກວດກາເອກະສານ. ຖ້າເອກະສານຄົບຖ້ວນ ແລະ ຖືກຕ້ອງຕາມຂັ້ນຕອນ 1 ແມ່ນຈະຮັບເອົາ ເພື່ອດຳເນີນຕາມຂັ້ນຕອນ. ແຕ່ຖ້າບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ແມ່ນຈະສົ່ງຄືນເອກະສານໃຫ້ຜູ້ຍື່ນຄຳຮ້ອງ ພ້ອມແນະນຳໃຫ້ປະກອບເອກະສານໃໝ່.

**ຂັ້ນຕອນ 3 ເຊັນ ແລະ ອອກໃບອະນຸຍາດ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ, ກົມລ້ຽງສັດ ແລະ ການປະມົງ ຈະປະເມີນຄວາມສ່ຽງ ແລະ ພິຈາລະນາອອກອະນຸຍາດນຳເຂົ້າ ພາຍໃນ 15 ວັນລັດຖະການ.

**ຂັ້ນຕອນ 4 ຮັບໃບອະນຸຍາດ**

ຜູ້ຍື່ນຄຳຮ້ອງ ສາມາດໄປຮັບເອົາໃບອະນຸຍາດນຳເຂົ້າໄດ້ທີ່ ກົມລ້ຽງສັດ ແລະ ການປະມົງ ຕາມວັນ ແລະເວລາທີ່ກຳນົດ.

❖ ໃນເວລາສິນຄ້າຮອດດ່ານຕົວຈິງ, ໃຫ້ປະກອບເອກະສານເພີ່ມເຕີມ ດັ່ງນີ້:

1) ໃບຢັ້ງຢືນສຸຂະພາບສັດ ຫຼື ສຸຂານາໄມສັດ ຈາກອົງການຄຸ້ມຄອງວຽກງານສັດຕະວະແພດຂອງປະເທດຕົ້ນທາງ;
2) ໃບຢັ້ງຢືນການກັກກັນ;
3) ສຳເນົາໃບຂົນສົ່ງສິນຄ້າ (Bill of Lading);
4) ໃບຢັ້ງຢືນກຳມະພັນສັດ (ກໍລະນີທີ່ນຳມາເປັນແນວພັນ);
5) ໃບຢັ້ງຢືນການສັກຢາກັນພະຍາດສັດ (ກໍລະນີທີ່ ສປປ ລາວ ຮຽກຮ້ອງ).

## 6. ຂັ້ນຕອນການອອກໃບອະນຸຍາດນຳເຂົ້າ ປາ, ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ

ການນຳເຂົ້າປາ, ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ຕ້ອງໄດ້ອະນຸຍາດຈາກກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້ ຊຶ່ງຂັ້ນຕອນ ແລະ ເອກະສານປະກອບ ສຳລັບການອອກອະນຸຍາດນຳເຂົ້າ ປະກອບມີດັ່ງນີ້:




### ຂັ້ນຕອນ 1: ຍື່ນເອກະສານ

1) ໃບຄຳຮ້ອງ (ມີແບບຟອມ);
2) ສຳເນົາບັດປະຈຳຕົວປະຊາຊົນ ຫຼື ໜັງສືເດີນທາງ;
3) ສຳເນົາໃບທະບຽນວິສາຫະກິດ;
4) ໃບແຈ້ງລາຄາສິນຄ້າ ແລະ ໃບແຈ້ງລາຍການສິນຄ້າ;
5) ໃບມອບສິດ (ຖ້າໃຫ້ຜູ້ອື່ນມາແລ່ນເອກະສານແທນ);
6) ໃບຢັ້ງຢືນມາດຕະຖານດ້ານເຕັກນິກ ກ່ຽວກັບ ຟາມ / ໂຮງຂ້າສັດ / ສະຖານທີ່ເກັບຮັກສາ / ບ່ອນຈຳໜ່າຍ ຕາມແຕ່ລະກໍລະນີ (GAHP/GMP);
7) ບົດລາຍງານການກວດກາຕົວຈິງ ຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ ຂັ້ນເມືອງ ຫຼື ແຂວງ ໃນກໍລະນີທີ່ມີການຮຽກຮ້ອງ.

**ຂັ້ນຕອນ 2 ພິຈາລະນາເອກະສານ**

ກົມລ້ຽງສັດ ແລະ ການປະມົງ ຈະດຳເນີນກວດກາເອກະສານ. ຖ້າເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມຂັ້ນຕອນ 1 ແມ່ນຈະຮັບເອົາ ເພື່ອດຳເນີນຕາມຂັ້ນຕອນ. ແຕ່ຖ້າບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ແມ່ນຈະສົ່ງຄືນເອກະສານໃຫ້ຜູ້ຍື່ນຄຳຮ້ອງ ພ້ອມແນະນຳໃຫ້ປະກອບເອກະສານໃໝ່.

**ຂັ້ນຕອນ 3 ເຊັນ ແລະ ອອກໃບອະນຸຍາດ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ, ກົມລ້ຽງສັດ ແລະ ການປະມົງ ຈະປະເມີນຄວາມສ່ຽງ ແລະ ພິຈາລະນາອອກອະນຸຍາດນຳເຂົ້າ ພາຍໃນ 5 ວັນລັດຖະການ.

**ຂັ້ນຕອນ 4 ຮັບໃບອະນຸຍາດ**

ຜູ້ຍື່ນຄຳຮ້ອງ ສາມາດໄປຮັບເອົາໃບອະນຸຍາດນຳເຂົ້າໄດ້ທີ່ ກົມລ້ຽງສັດ ແລະ ການປະມົງ ຕາມວັນ ແລະ ເວລາທີ່ກຳນົດ.

- ໃນເວລາສິນຄ້າຮອດດ່ານຕົວຈິງ, ໃຫ້ປະກອບເອກະສານເພີ່ມເຕີມ ດັ່ງນີ້:
  1) ໃບຢັ້ງຢືນສຸຂະພາບສັດນ້ຳ ຫຼື ສຸຂານາໄມ ຈາກອົງການຄຸ້ມຄອງວຽກງານສັດຕະວະແພດ ຫຼື ປະມົງ ຂອງປະເທດຕົ້ນທາງ;
  2) ໃບຢັ້ງຢືນກຳມະພັນສັດ (ກໍລະນີທີ່ນຳມາເປັນແນວພັນ);
  3) ສຳເນົາໃບຂົນສົ່ງສິນຄ້າ (Bill of Lading);
  4) ໃບຢັ້ງຢືນ CITES ຂອງປະເທດຕົ້ນທາງ ຫຼື ເອກະສານ ທີ່ກ່ຽວຂ້ອງ ກັບ ປະເທດທີສາມ ຖ້າເປັນປະເພດສັດນ້ຳຫວງຫ້າມ ຫຼື ຄວບຄຸມ ຂອງສາກົນ;
  5) ໃບຢັ້ງຢືນການບຳບັດ, ຜົນການວິໄຈ ແລະ ການປ້ອງກັນພະຍາດສັດນ້ຳ ຖ້າມີຄວາມຈຳເປັນ.

## 7. <u>ຂັ້ນຕອນການຂຶ້ນທະບຽນອາຫານສັດນຳເຂົ້າ</u>

ອາຫານສັດນຳເຂົ້າ ຕ້ອງໄດ້ຮັບການຂຶ້ນທະບຽນຈາກກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້ ຊຶ່ງຂັ້ນຕອນ ແລະ ເອກະສານປະກອບ ສຳລັບການຂຶ້ນທະບຽນ ປະກອບມີດັ່ງນີ້:



**ຂັ້ນຕອນ 1: ຍື່ນເອກະສານ ແລະ ຕົວຢ່າງອາຫານສັດ ທີ່ນຳມາຂໍຂຶ້ນທະບຽນ**

1) ໃບຄຳຮ້ອງ (ມີແບບຟອມ);
2) ສຳເນົາໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດອາຫານສັດ;
3) ໃບມອບສິດຈາກຜູ້ຜະລິດອາຫານສັດ ແລະ ໃບຂຶ້ນທະບຽນອາຫານສັດ ຈາກປະເທດສົ່ງອອກ ຖ້າເປັນອາຫານສັດນຳເຂົ້າ;
4) ໃບມອບສິດ ແລະ ບັດປະຈຳຕົວຂອງຜູ້ຕາງໜ້າ ໃນກໍລະນີໃຫ້ຜູ້ອື່ນມາຂໍຂຶ້ນທະບຽນແທນ;
5) ສະຫຼາກອາຫານສັດ ແລະ ຕົວຢ່າງອາຫານສັດ ບໍ່ໜ້ອຍກວ່າ ຫ້າຮ້ອຍ ກຣາມ ຕໍ່ຊຸດ;
6) ບົດລາຍງານຜົນການທົດລອງການນຳໃຊ້ສູດອາຫານສັດ ທີ່ມາຂໍຂຶ້ນທະບຽນ;
7) ໃບແຈ້ງຊະນິດ ແລະ ລາຍການຊຸດອາຫານສັດ ທີ່ມີລາຍລະອຽດຂອງສ່ວນປະກອບຫຼັກຂອງອາຫານສັດ;
8) ເອກະສານອື່ນທີ່ເຫັນວ່າມີຄວາມຈຳເປັນ ຕາມການຮຽກຮ້ອງຂອງກົມລ້ຽງສັດ ແລະ ການປະມົງ.

**ຂັ້ນຕອນ 2 ພິຈາລະນາເອກະສານ**

ກົມລ້ຽງສັດ ແລະ ການປະມົງ ຈະດຳເນີນກວດກາເອກະສານ. ຖ້າເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມຂັ້ນຕອນ 1 ແມ່ນຈະຮັບເອົາ ເພື່ອດຳເນີນຕາມຂັ້ນຕອນ. ແຕ່ຖ້າບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ແມ່ນຈະສົ່ງຄືນເອກະສານໃຫ້ຜູ້ຍື່ນຄຳຮ້ອງ ພ້ອມແນະນຳໃຫ້ປະກອບເອກະສານໃໝ່.

**ຂັ້ນຕອນ 3 ເຊັນ ແລະ ອອກໃບຂຶ້ນທະບຽນ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ, ກົມລ້ຽງສັດ ແລະ ການປະມົງ ຈະພິຈາລະນາອອກໃບຂຶ້ນທະບຽນອາຫານສັດ ພາຍໃນກຳນົດເວລາ 120 ວັນ ນັບແຕ່ວັນທີ່ໄດ້ຮັບຄຳຮ້ອງ ເປັນຕົ້ນໄປ.

**ຂັ້ນຕອນ 4 ຮັບໃບຂຶ້ນທະບຽນ**

ຜູ້ຍື່ນຄຳຮ້ອງ ສາມາດໄປຮັບເອົາໃບຂຶ້ນທະບຽນໄດ້ທີ່ ກົມລ້ຽງສັດ ແລະ ການປະມົງ ຕາມວັນ ແລະ ເວລາທີ່ກຳນົດ.

## 8. ຂັ້ນຕອນການອອກໃບອະນຸຍາດນຳເຂົ້າ ອາຫານ ແລະ ເຄື່ອງດື່ມ

ການນຳເຂົ້າ ອາຫານ ແລະ ເຄື່ອງດື່ມ ຕ້ອງໄດ້ອະນຸຍາດຈາກກົມອາຫານ ແລະ ຢາ ຫຼື ພະແນກ ສາທາລະນະສຸກ ແຂວງ, ນະຄອນຫຼວງວຽງຈັນ. ສະເພາະອາຫານນຳເຂົ້າທີ່ມີຄວາມສ່ຽງສູງ ແລະ ອາຫານໃໝ່ ຕ້ອງໄດ້ຮັບການຈົດທະບຽນຈາກກົມອາຫານ ແລະ ຢາ ກ່ອນການຂໍອະນຸຍາດນຳເຂົ້າ. ສຳລັບຂັ້ນຕອນ ແລະ ເອກະສານປະກອບ ສຳລັບການອອກອະນຸຍາດນຳເຂົ້າ ປະກອບມີດັ່ງນີ້:



### ຂັ້ນຕອນ 1: ຍື່ນເອກະສານ

1) ໃບຄຳຮ້ອງຂໍອະນຸຍາດນຳເຂົ້າອາຫານ (ເອກະສານຊ້ອນທ້າຍ 2) (1 ສະບັບ);
2) ໃບແຈ້ງລາຄາສິນຄ້າ (2 ສະບັບ);
3) ໃບມັດຫໍ່ສິນຄ້າ (2 ສະບັບ);
4) ໃບຢັ້ງຢືນຮັບຮອງຄວາມປອດໄພອາຫານໃດໜຶ່ງຈາກປະເທດສົ່ງອອກເຊັ່ນ: Free sale Certificate, ໃບຢັ້ງຢືນ GHP, GMP, HACCP, ISO 22000 ຫຼື ການຢັ້ງຢືນອື່ນໆຈາກ ອົງການຄຸ້ມຄອງຄວາມປອດໄພອາຫານຂອງປະເທດສົ່ງອອກ ຢ່າງໜ້ອຍຍັງມີອາຍຸການນຳໃຊ້ໄດ້ 03 ເດືອນ (ເປັນພາສາອັງກິດ ແລະ ສະບັບແທ້, ຖ້າສະບັບສຳເນົາ ໃຫ້ຈ້ຳກາຂອງບໍລິສັດນຳເຂົ້າ) (1 ສະບັບ);
5) ໃບຢັ້ງຢືນການວິໄຈຈາກອົງການຄຸ້ມຄອງຄວາມປອດໄພອາຫານຂອງປະເທດສົ່ງອອກ ຫຼື ຫ້ອງວິໄຈທີ່ໄດ້ຮັບຮອງຢ່າງເປັນທາງການ ຢ່າງໜ້ອຍຍັງມີອາຍຸການນຳໃຊ້ໄດ້ສຳລັບຊຸດຜະລິດນັ້ນ (ເປັນພາສາອັງກິດ ແລະ ສະບັບແທ້, ຖ້າສະບັບສຳເນົາໃຫ້ຈ້ຳກາຂອງບໍລິສັດນຳເຂົ້າ) (2 ສະບັບ);
6) ໃບທະບຽນວິສາຫະກິດ (1 ສະບັບ);
7) ມີສະຫຼາກ ຫຼື ສະຕິກເກີ ເປັນພາສາລາວ (1 ສະບັບ);
8) ຕົວຢ່າງຜະລິດຕະພັນອາຫານ (ຊະນິດລະ 1 ຕົວຢ່າງ);
9) ໃບຢັ້ງຢືນການຂຶ້ນທະບຽນອາຫານຂອງ ສປປ ລາວ (ຖ້າມີ) (1 ສະບັບ).

### ຂັ້ນຕອນ 2 ພິຈາລະນາເອກະສານ

ກົມອາຫານ ແລະ ຢາ ຫຼື ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງວຽງຈັນ ຈະດຳເນີນກວດກາເອກະສານ. ຖ້າເອກະສານຄົບຖ້ວນ ແລະ ຖືກຕ້ອງຕາມຂັ້ນຕອນ 1 ແມ່ນຈະຮັບເອົາ ເພື່ອດຳເນີນຕາມຂັ້ນຕອນ. ແຕ່ຖ້າບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ແມ່ນຈະສົ່ງຄືນເອກະສານໃຫ້ຜູ້ຍື່ນຄຳຮ້ອງ ພ້ອມແນະນຳໃຫ້ປະກອບເອກະສານໃໝ່.

### ຂັ້ນຕອນ 3 ເຊັນ ແລະ ອອກໃບອະນຸຍາດ

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ, ກົມອາຫານ ແລະ ຢາ ຫຼື ພະແນກສາທາລະນະສຸກແຂວງ, ນະຄອນຫຼວງວຽງຈັນ ຈະປະເມີນຄວາມສ່ຽງ ແລະ ພິຈາລະນາອອກອະນຸຍາດນຳເຂົ້າ ພາຍໃນ 03 ວັນລັດຖະການ.

**ຂັ້ນຕອນ 4 ຮັບໃບອະນຸຍາດ**

ຜູ້ຍື່ນຄໍາຮ້ອງ ສາມາດໄປຮັບເອົາໃບອະນຸຍາດນໍາເຂົ້າໄດ້ທີ່ ກົມອາຫານ ແລະ ຢາ ຫຼື ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງວຽງຈັນ ຕາມວັນ ແລະ ເວລາທີ່ກໍານົດ.

❖ ໃນເວລາສິນຄ້າຮອດດ່ານຕົວຈິງ, ໃຫ້ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ປະຈໍາດ່ານ ປະຕິບັດດັ່ງນີ້:

1) ກວດກາຄວາມຖືກຕ້ອງຂອງເອກະສານ;
2) ກວດກາອາຫານຕົວຈິງສົມທຽບໃສ່ເອກະສານ;
3) ເກັບຕົວຢ່າງອາຫານ ແລະ ທົດສອບກັບທີ່ ຕາມທີ່ໄດ້ກໍານົດໄວ້ໃນຄູ່ມືກວດກາອາຫານ;
4) ລົງລາຍເຊັນ ແລະ ປະທັບຕາກວດຜ່ານໃສ່ເອກະສານ ສົ່ງອອກ-ນໍາເຂົ້າ ແລະ ສົ່ງຜ່ານ ທີ່ບັນລຸຕາມເງື່ອນໄຂ;
5) ແລະ ອື່ນໆ.

## 9. ຂັ້ນຕອນການອອກໜັງສືຢັ້ງຢືນສິດທິພິເສດດ້ານອັດຕາພາສີນໍາເຂົ້າ

ສິນຄ້ານໍາເຂົ້າ ທີ່ຕ້ອງການໄດ້ຮັບສິດທິພິເສດທາງດ້ານອັດຕາພາສີນໍາເຂົ້າ ຕ້ອງໄດ້ຮັບການຢັ້ງຢືນຈາກກົມພາສີ (ພະແນກນິຕິກໍາ), ກະຊວງການເງິນ ຊຶ່ງຂັ້ນຕອນ ແລະ ເອກະສານປະກອບ ສໍາລັບການອອກໜັງສືຢັ້ງຢືນສິດທິພິເສດດ້ານອັດຕາພາສີນໍາເຂົ້າ ປະກອບມີດັ່ງນີ້:




### ຂັ້ນຕອນ 1: ຍື່ນເອກະສານ

ຜູ້ນໍາເຂົ້າສິນຄ້າ ທີ່ຕ້ອງການໄດ້ຮັບສິດທິພິເສດດ້ານອັດຕາພາສີ ຕາມກອບສັນຍາການຄ້າເສລີຕ່າງໆ ເປັນຕົ້ນ ສັນຍາການຄ້າດ້ານຜະລິດຕະພັນອາຊຽນ, ສັນຍາການຄ້າເສລີອາຊຽນ-ຈີນ, ສັນຍາການຄ້າເສລີອາຊຽນ-ເກົາຫຼີ, ສັນຍາຮ່ວມມືດ້ານເສດຖະກິດອາຊຽນ-ຍີ່ປຸ່ນ, ສັນຍາການຄ້າເສລີອາຊຽນ-ອິນເດຍ, ສັນຍາການຄ້າເສລີອາຊຽນ-ອົສຕາລີ ແລະ ນິວຊີແລນ, ສັນຍາການຄ້າແບບສອງຝ່າຍລາວ-ຫວຽດນາມ, ສັນຍາການຄ້າແບບສອງຝ່າຍລາວ-ອາເມລິກາ ແລະ ສັນຍາຂອງອົງການການຄ້າໂລກ. ຜູ້ນໍາເຂົ້າ ຕ້ອງປະກອບເອກະສານ ຍື່ນຕໍ່ກົມພາສີ (ພະແນກນິຕິກໍາ) ດັ່ງລຸ່ມນີ້:

1) ໃບສະເໜີ;
2) ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຫຼື ເອກະສານຢັ້ງຢືນອື່ນໆ ທີ່ກ່ຽວຂ້ອງ;
3) ໃບແຈ້ງລາຄາ;
4) ໃບຫຸ້ມຫໍ່ ແລະ ເອກະສານຂົນສົ່ງ;
5) ໃບຢັ້ງຢືນການມອບພັນທະອາກອນ ປະຈຳສົກປີປະຈຸບັນ.

ຜູ້ນຳເຂົ້າ ສາມາດຍື່ນເອກະສານດ້ວຍຕົນເອງ, ສົ່ງທາງແຟັກ ທີ່ເບີ 021-285294 ຫຼື ສະແກນ ເອກະສານເປັນໄຟຣ໌ PDF ແລ້ວສົ່ງທາງອີເມລ໌ originunit@customs.gov.la

## ຂັ້ນຕອນ 2: ພິຈາລະນາເອກະສານ

ພະແນກນິຕິກຳ ໄດ້ຮັບມອບໝາຍຈາກຫົວໜ້າກົມພາສີ ເພື່ອດຳເນີນກວດກາເອກະສານ ໄດ້ໂດຍກົງ. ຖ້າເອກະສານຄົບຖ້ວນ ແລະ ຖືກຕ້ອງຕາມຂັ້ນຕອນ 1 ແມ່ນຈະຮັບເອົາ ເພື່ອດຳເນີນຕາມຂັ້ນຕອນ. ແຕ່ ຖ້າບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ແມ່ນຈະສົ່ງຄືນເອກະສານໃຫ້ຜູ້ຍື່ນຄຳຮ້ອງ ພ້ອມແນະນຳໃຫ້ປະກອບ ເອກະສານໃໝ່.

## ຂັ້ນຕອນ 3: ເຊັນ ແລະ ອອກໜັງສືຢັ້ງຢືນ

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ, ກົມພາສີ (ພະແນກນິຕິກຳ) ຈະອອກໜັງສືຢັ້ງຢືນ ສິດທິພິເສດດ້ານອັດຕາພາສີນຳເຂົ້າ.

## ຂັ້ນຕອນ 4 ຮັບເອົາໜັງສືຢັ້ງຢືນ

ກົມພາສີ (ພະແນກນິຕິກຳ) ຈະອອກໜັງສືຢັ້ງຢືນໃຫ້ແກ່ ຜູ້ນຳເຂົ້າ ແລະ ດ່ານພາສີຊາຍແດນບ່ອນນຳເຂົ້າ ຜ່ານທາງແຟັກ ຫຼື ທາງອີເມລ໌ (ກໍລະນີຜູ້ນຳເຂົ້າ ຍື່ນເອກະສານຜ່ານຊ່ອງທາງດັ່ງກ່າວ) ເພື່ອດຳເນີນຂັ້ນ ຕອນການແຈ້ງພາສີເປັນລາຍລະອຽດ. ສຳລັບເອກະສານຕົ້ນສະບັບ ແມ່ນຈະຖືກຈັດສົ່ງທາງໄປສະນີໃຫ້ ຜູ້ນຳເຂົ້າ ແລະ ບໍລິສັດ ຕ້ອງຮັບຜິດຊອບເສຍຄ່າບໍລິການ ເອງ.

❖ ໃນເວລາສິນຄ້າຮອດດ່ານຕົວຈິງ, ໃຫ້ເຈົ້າໜ້າທີ່ພາສີປະຈຳດ່ານ ກວດກາ ໃບຢັ້ງຢືນແຫຼ່ງກຳເນີດ ສິນຄ້າ (ສະບັບຕົ້ນ) ແລະ ກວດກາໜັງສືຢັ້ງຢືນສິດທິພິເສດດ້ານອັດຕາພາສີ ໃສ່ສິນຄ້າຕົວຈິງ.

## 10. <u>ຂັ້ນຕອນການກວດປ່ອຍສິນຄ້າ ນຳເຂົ້າ ຢູ່ດ່ານພາສີສາກົນ</u>

ໂດຍລວມແລ້ວ, ຂັ້ນຕອນການກວດປ່ອຍສິນຄ້ານຳເຂົ້າ ຢູ່ດ່ານພາສີສາກົນ ແມ່ນໃຫ້ປະຕິບັດຕາມ ບົດແນະນຳ ກ່ຽວກັບການແຈ້ງພາສີເປັນລາຍລະອຽດດ້ວຍລະບົບເອເລັກໂຕຣນິກເລກທີ 00097/ກພສ, ລົງວັນທີ 06 ມັງກອນ 2017 ຊຶ່ງສາມາດສັງລວມຫຍໍ້ໄດ້ດັ່ງນີ້:




### ຂັ້ນຕອນທີ 1: ການແຈ້ງເອກະສານຂົນສົ່ງ

ໃນເວລາສິນຄ້າ, ເຄື່ອງຂອງ ມາຮອດດ່ານພາສີຊາຍແດນ ຜູ້ຂັບລົດບັນທຸກສິນຄ້າ ຕ້ອງນຳເອົາໃບຂົນສົ່ງສິນຄ້າຍື່ນຕໍ່ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບຄຸ້ມຄອງໃບຂົນສົ່ງສິນຄ້າພາຍໃນ 24 ຊົ່ວໂມງ ຕາມມາດຕາ 19 ຂອງກົດໝາຍວ່າດ້ວຍພາສີ.

### ຂັ້ນຕອນທີ 2: ກວດກາເອກະສານ

ເຈົ້າໜ້າທີ່ຄຸ້ມຄອງສາງສິນຄ້າຮັບໃບຂົນສົ່ງ ແລະ ພິມຂໍ້ມູນການຂົນສົ່ງສິນຄ້າ ລົງໃນລະບົບຄຸ້ມຄອງຂໍ້ມູນການຂົນສົ່ງ. ສຳລັບດ່ານພາສີຊາຍແດນທີ່ບໍ່ໄດ້ນຳໃຊ້ລະບົບຄຸ້ມຄອງຂໍ້ມູນການຂົນສົ່ງ ແມ່ນໃຫ້ບັນທຶກຂໍ້ມູນດັ່ງກ່າວດ້ວຍປຶ້ມຕິດຕາມຂາເຂົ້າ-ອອກສາງ, ຈາກນັ້ນ ຈຶ່ງອະນຸຍາດໃຫ້ຜູ້ແຈ້ງພາສີນຳເອົາສິນຄ້າເຂົ້າສາງ ຫຼື ສະຖານທີ່ຈອດລົດບັນທຸກ ເພື່ອດຳເນີນຂັ້ນຕອນການແຈ້ງພາສີສິນຄ້າຊົ່ວຄາວ ແລະ ການປະກອບໃບແຈ້ງພາສີເປັນລາຍລະອຽດ.

**ຂັ້ນຕອນທີ 3: ການແຈ້ງພາສີເປັນລາຍລະອຽດ**

ເອກະສານປະກອບ ສຳລັບການແຈ້ງພາສີເປັນລາຍລະອຽດ ຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານ ໂດຍສະແກນ ເພື່ອຄັດຕິດເອກະສານເອເລັກໂຕຣນິກເຂົ້າໃນລະບົບອາຊີກູດາ ຊຶ່ງປະກອບມີດັ່ງນີ້:

1) ໃບແຈ້ງລາຄາ
2) ໃບລາຍການຫຸ້ມຫໍ່ສິນຄ້າ
3) ໃບຂົນສົ່ງສິນຄ້າ (ຖ້າມີ)
4) ໃບແຈ້ງສິນຄ້າຊົ່ວຄາວ (ຖ້າມີ)
5) ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ກໍລະນີຕ້ອງການສິດທິພິເສດດ້ານອັດຕາພາສີ)
6) ໃບຢັ້ງຢືນສິດທິພິເສດດ້ານອັດຕາພາສີຂອງກົມພາສີ (ກໍລະນີຕ້ອງການສິດທິພິເສດດ້ານອັດຕາພາສີ)
7) ໃບອະນຸຍາດຈາກຂະແໜງການລັດທີ່ກ່ຽວຂ້ອງ (ກໍລະນີເປັນສິນຄ້າລັດຄວບຄຸມ)
8) ໃບມອບສິດການແຈ້ງພາສີ (ຖ້າເປັນການແຈ້ງພາສີດ້ວຍຜູ້ບໍລິການແຈ້ງພາສີ)

**ຂັ້ນຕອນທີ 4: ກວດກາ ແລະ ຄວບຄຸມ ຂອງເຈົ້າໜ້າທີ່ພາສີ**

ຫຼັງຈາກນັ້ນ, ເຈົ້າໜ້າທີ່ ກວດກາຄວາມຄົບຖ້ວນ ແລະ ຖືກຕ້ອງຂອງຂໍ້ມູນທີ່ຢູ່ໃນລະບົບອາຊີກູດາ ແລ້ວ ດຳເນີນການກວດກາສິນຄ້າຕົວຈິງ ຕາມຫຼັກການບໍລິຫານຄວາມສ່ຽງ ແລະ ການກວດກາການຈ່າຍຄ່າ ພັນທະຕ່າງໆ.

**ຂັ້ນຕອນທີ 5: ປ່ອຍສິນຄ້າອອກຈາກສາງ**

ພາຍຫຼັງການກວດກາຂອງເຈົ້າໜ້າທີ່ພາສີແລ້ວ, ຫົວໜ້າ ຫຼື ຮອງຫົວໜ້າດ່ານ ຈະພິຈາລະນາອະນຸມັດ ເປັນຄັ້ງສຸດທ້າຍ.

**ຂັ້ນຕອນທີ 6: ນຳສິນຄ້າອອກຈາກສາງ**

ຜູ້ແຈ້ງພາສີ ຕ້ອງນຳເອກະສານທັງໝົດ ທີ່ໄດ້ຮັບອະນຸມັດຈາກຫົວໜ້າ ຫຼື ຮອງຫົວໜ້າດ່ານ ໄປແຈ້ງຕໍ່ ເຈົ້າໜ້າທີ່ພາສີຄຸ້ມຄອງສາງສິນຄ້າ ເພື່ອດຳເນີນການຕິດຕາມການຂົນສິນຄ້າຂຶ້ນລົດບັນທຸກ ແລະ ນຳ ອອກຈາກສາງ ຫຼື ດ່ານພາສີ ຢ່າງຖືກຕ້ອງ.

**ຮຽບຮຽງເນື້ອໃນ ແລະ ຈັດພິມໂດຍ:**

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການນຳເຂົ້າ ແລະ ສົ່ງອອກ
ພະແນກອຳນວຍຄວາມສະດວກທາງດ້ານການຄ້າ

**ຕິດຕໍ່ພົວພັນ:**


ທີ່ຢູ່: ຖະໜົນ ໂພນໄຊ, ບ້ານ ໂພນໄຊ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ/ແຟັກ: +85621 454224

ເວັບໄຊທ໌: www.laotradeportal.gov.la
www.dimex.moic.gov.la

ທີ່ຢູ່ອີເມລ໌: dimex.tfd@gmail.com
enquiries@laotradeportal.gov.la

**ສະໜັບສະໜູນໂດຍ:**
ໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການຄ້າ ຂອງ ສປປ ລາວ
Lao PDR Competitiveness and Trade Project (LCT)